ຄະນະກຳມະການແຜນການ ແລະ ການລົງທຶນ

ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ)

**Committee for Planning and Investment**
**Poverty Reduction Fund (PRF)**

# ບົດລາຍງານຄວາມຄືບໜ້າ ປະຈຳໄຕມາດ

## 1 ເມສາ - 30 ມີຖຸນາ 2004

# Quarterly Progress Report

## 1 April – 30 June 2004

ສິງຫາ 2004, ວຽງຈັນ, ສປປ ລາວ

**August 2004, Vientiane, Lao PDR**

# ບົດລາຍງານຄວາມຄືບໜ້າ ປະຈຳໄຕມາດ: ເມສາ - ມິຖຸນາ 2004

## ສາລະບານ


1. ສະຫລຸບການຈັດຕັ້ງປະຕິບັດໃນບົດລາຍງານ ........ 2
   1.1. ວົງຈອນກິດຈະກຳ ຂອງ ທລຍ ........ 2
   1.2. ສັງລວມກິດຈະກຳ ທລຍ ຢູ່ໃນ 10 ເມືອງ ........ 3
2. ການຈັດຕັ້ງປະຕິບັດໂຄງການຍ່ອຍ - ລາຍລະອຽດ ແລະ ຜົນໄດ້ຮັບ ........ 4
   2.1. ການຊີ້ນຳໂຄງການຍ່ອຍທີ່ກຳລັງຈັດຕັ້ງປະຕິບັດ ........ 4
      *ຂໍ້ມູນໂຄງການຍ່ອຍ ແລະ ຕົວເລກ ຈາກ ກອງປະຊຸມຕັດສິນຂັ້ນເມືອງ ໃນຮອບວຽນ I* ........ 4
      *ການເບີກຈ່າຍງົບປະມານໂຄງການຍ່ອຍ ແລະ ຄວາມຄືບໜ້າໂຄງການຍ່ອຍ* ........ 9
      *ການມອບ-ຮັບໂຄງການຍ່ອຍທີ່ເຮັດສຳເລັດ* ........ 9
      *ຄຸນນະພາບໂຄງການຍ່ອຍ* ........ 10
   2.2. ການມີສ່ວນຮ່ວມຂອງຊາວບ້ານໃນຂະບວນການ ທລຍ ........ 10
      *ການຝຶກອົບຮົມການຈັດຕັ້ງປະຕິບັດ ແລະ ບູລະນະໂຄງການຍ່ອຍໃຫ້ແກ່ຊຸມຊົນ* ........ 10
      *ການປະກອບສ່ວນຈາກຊຸມຊົນ* ........ 12
   2.3. ການຂະຫຍາຍໂຄງການໄປຫາເມືອງໃຫມ່ ........ 12
3. ກິດຈະກຳອື່ນໆ ........ 13
   3.1. ການສຳຫລວດຂໍ້ມູນພື້ນຖານ ........ 13
   3.2. ການສຶກສາສັງຄົມ ........ 14
   3.3. ການປ້ອງກັນ ແລະ ແກ້ໄຂຂໍ້ຂັດແຍ່ງ ........ 14
   3.4. ຄະນະຈາກທະນາຄານໂລກ ........ 15
   3.5. ວຽກງານຈັດຕັ້ງ - ພະນັກງານ ........ 15
   3.6. ບົດຮຽນຖອດຖອນໄດ້ໃນຮອບວຽນທີ່ 1 (2003 - 2004) ........ 16
   3.7. ການສ້າງວິໄສທັດ ແລະ ພາລະກິດ ຂອງ ທລຍ ........ 16
4. ວຽກງານການເງິນ ........ 16
   4.1. ລາຍຈ່າຍ ຂອງ ໂຄງການ ........ 17
   4.2. ທຶນສົມທົບຂອງລັດຖະບານ ........ 18
   4.3. ການຈັດຊື້-ຈັດຈ້າງ ........ 18
5. ແຜນວຽກສຳລັບໄຕມາດຕໍ່ໄປ ........ 18


**ເອກະສານຄັດຕິດ:**

ເອກະສານຊ້ອນທ້າຍ 1. ສັງລວມການເບີກຈ່າຍງົບປະມານໂຄງການຍ່ອຍ ແລະ ຄວາມຄືບໜ້າໂຄງການຍ່ອຍ

ເອກະສານຊ້ອນທ້າຍ 2. ແຜນວາດຄວາມຄືບໜ້າຂອງກິດຈະກຳ ທລຍ ໃນ 10 ເມືອງ

ເອກະສານຊ້ອນທ້າຍ 3. ຄຳສະເໜີ ວິໄສທັດ ແລະ ພາລະບົດບາດ ຂອງ ທລຍ

ເອກະສານຊ້ອນທ້າຍ 4. ແຜນວຽກ ບໍລິຫານໂຄງການ ສຳລັບ ໄຕມາດຕໍ່ໄປ (ກໍລະກົດ - ກັນຍາ 2004)

# 1. ສະຫລຸບການຈັດຕັ້ງປະຕິບັດໃນບົດລາຍງານ

ເດືອນເມສາ 2004 ເປັນເດືອນທີ່ມີເຫດການສຳຄັນ ຍ້ອນວ່າເປັນໄລຍະຄົບຮອບ 1 ປີ ຂອງ ການຈັດຕັ້ງປະຕິບັດວຽກງານ ຂອງ ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ), ການຈັດຕັ້ງປະຕິບັດໂຄງການຍ່ອຍຢູ່ຂັ້ນບ້ານ ຂອງ 10 ເມືອງພາຍໃນ 3 ແຂວງດຳເນີນໄປຢ່າງຂຸ້ນຂ້ຽວ. ຈາກການປະເມີນຜົນກ່ຽວກັບລະບົບຄຸ້ມຄອງການໂຄງການໃນປັດຈຸບັນ ແລະ ຄຸນນະພາບ ຂອງ ໂຄງການຍ່ອຍ ໂດຍພະນັກງານຂອງທະນາຄານໂລກນັ້ນ ເຫັນວ່າຢູ່ໃນລະດັບດີ. ເຖິງແນວໃດກໍ່ຕາມ, ການຈັດຕັ້ງປະຕິບັດກໍ່ຍັງຕ້ອງມີການປັບປຸງ ແລະ ແກ້ໄຂຈຸດທີ່ບົກພ່ອງ. ອີກບັນຫານຶ່ງ ແມ່ນເວລາ ສຳລັບການຈັດຕັ້ງປະຕິບັດວຽກງານໃນຮອບວຽນ I ຍັງບໍ່ພຽງພໍກັບໜ້າວຽກ ຂອງ ທລຍ, ຍ້ອນວ່າຂັ້ນຕອນ ຂອງ ທລຍ ຍັງເປັນຂັ້ນຕອນແບບໃໝ່ ຫລື ທັງປັບປຸງທັງເຮັດໄປພ້ອມ ຊຶ່ງເຮັດໃຫ້ລະບົບທັງຫມົດ ຂອງ ທລຍ ບໍ່ສາມາດຈັດຕັ້ງປະຕິບັດໄດ້ຢ່າງເຕັມສ່ວນ.

ກິດຈະກຳໃນໂຄງການຍ່ອຍທັງຫມົດໃນຮອບວຽນ I ຄາດວ່າຈະໃຫ້ສຳເລັດລົງໃນເດືອນສິງຫາ 2004 ແລະ ຈະມອບໃຫ້ຊຸມຊົນຢ່າງເປັນທາງການ. ແຕ່ວ່າໄລຍະນີ້ແມ່ນຢູ່ໃນລະດູຝົນ ແລະ ອາດຈະເຮັດໃຫ້ໂຄງການຍ່ອຍບາງໂຄງການສຳເລັດຊ້າກ່ອນກຳນົດ. ບັນດາວຽກງານຕ່າງໆໃນຮອບວຽນ II ເຊັ່ນ: ການຈັດກອງປະຊຸມຂັ້ນບ້ານ, ການຈັດລຽງບູລິມະສິດຄວາມຕ້ອງການບ້ານ, ການປະເມີນ / ການອອກແບບ / ການຂື້ນງົບປະມານ ແລະ ອື່ນໆ ຄາດວ່າຈະເລີ້ມຈັດຕັ້ງ ໃນເດືອນ ກັນຍາ 2004.

ກິດຈະກຳຕ່າງໆທີ່ໄດ້ຈັດຕັ້ງປະຕິບັດຢູ່ໃນ 10 ເມືອງໃນຮອບວຽນ I ນັ້ນ ຍັງຈະປະຕິບັດອີກຄືນເກົ່າຢູ່ໃນຮອບວຽນ II. ນອກ ຈາກ 10 ເມືອງ ກໍ່ຍັງຈະເພີ້ມອີກ 4 ເມືອງໃໝ່ ຊຶ່ງປະກອບມີ ເມືອງຫົວເມືອງ, ວຽງໄຊ ແລະ ຊຳໃຕ້ ຂອງແຂວງຫົວພັນ ຊຶ່ງເປັນແຂວງທີ່ທຸກຍາກທີ່ສຸດ ຂອງ ລາວ ແລະ ຍັງມີ ເມືອງພິນ ຂອງ ແຂວງສະຫວັນນະເຂດອີກ.

ຄວາມສຳເລັດ ຂອງ ການຈັດຕັ້ງປະຕິບັດໃນຮອບວຽນ I ຖືວ່າເປັນຄວາມສຳເລັດຂອງຫລາຍໆກິດຈະກຳ. ພະນັກງານ ທລຍ ຈະສືບຕໍ່ອອກແບບລະບົບ ແລະ ຂັ້ນຕອນຕ່າງໆ ພ້ອມທັງຝຶກອົບຮົມ ແລະ ອື່ນໆ ເພື່ອສະຫນັບສະຫນູນໂຄງການ ແລະ ໂຄງການຍ່ອຍ. ໃນດ້ານຂອງການຄຸ້ມຄອງບໍລິຫານ ຕ້ອງມີການປັບປຸງ ແລະ ສ້າງຄວາມເຂັ້ມແຂງ ເຊັ່ນ: ຫລຸດຜ່ອນອັດຕາການລາອອກຈາກວຽກຂອງພະນັກງານ, ປັບປຸງລະບົບຕິດຕາມ ແລະ ກວດກາ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດ, ປັບປຸງການເກັບ-ສົ່ງຂໍ້ມູນ ແລະ ວິໃຈຂໍ້ມູນ, ປັບປຸງລະບົບຄຸ້ມຄອງການເງິນ ພ້ອມທັງການເຮັດລາຍງານງົບປະມານໃຊ້ຈ່າຍຂອງໂຄງການນັບແຕ່ຂັ້ນສູນກາງ ເຖິງ ຂັ້ນເມືອງ, ແລະ ປັບປຸງການໄຫລວຽນງົບປະມານຂອງ ໂຄງການຍ່ອຍ. ການປັບປຸງວຽກງານທີ່ໄດ້ກ່າວມານີ້ ແມ່ນມີຄວາມຈຳເປັນ ເພື່ອເຮັດໃຫ້ ທລຍ ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິທິພາບ, ປະສົບຜົນສຳເລັດ, ວຽກມີຄຸນນະພາບ ແລະ ເຮັດໃຫ້ການເບີກຈ່າຍງົບປະມານໃຫ້ຂັ້ນບ້ານມີ ຄວາມຫມາຍ.

## 1.1. ວົງຈອນກິດຈະກຳ ຂອງ ທລຍ

ວົງຈອນກິດຈະກຳ ຂອງ ທລຍ ປະກອບດ້ວຍກອງປະຊຸມຫລາຍໆຂັ້ນ ຊຶ່ງອອກແບບເພື່ອ: ແຈ້ງການໃຫ້ບັນດາຄູ່ຮ່ວມງານ, ແລະ ພາກສ່ວນທີ່ສົນໃຈກິດຈະກຳ ທລຍ, ເສີມສ້າງຄວາມສາມາດໃຫ້ແກ່ການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໂຄງການ / ໂຄງການຍ່ອຍ, ອຳນວຍຄວາມສະດວກໃນການວາງແຜນຊຸມຊົນ, ຄວາມເປັນເຈົ້າການ, ຈັດຕັ້ງປະຕິບັດ, ດຳເນີນຕາມຂັ້ນຕອນ ແລະ ບູລະນະໂຄງການຍ່ອຍ, ຕິດຕາມ ແລະ ປະເມີນຜົນໂຄງການຍ່ອຍໃນຊ່ວງໄລຍະຈັດຕັ້ງປະຕິບັດ ແລະ ພາຍຫລັງຈັດຕັ້ງປະຕິບັດ. ອົງປະກອບຕ່າງໆ ທີ່ສ້າງເປັນວົງຈອນ ກິດຈະກຳ ທລຍ ລວມມີ:

- **ກະຈາຍສຽງທາງວິທະຍຸ**
- **ກອງປະຊຸມພົບປະສະມາຄົມ ຂັ້ນແຂວງ**
- **ກອງປະຊຸມພົບປະສະມາຄົມ ຂັ້ນເມືອງ**
- **ກອງປະຊຸມພົບປະສະມາຄົມ ຂັ້ນເຂດ** (ລວມທັງການຄັດເລືອກ ແລະ ຝຶກອົບຮົມຜູ້ປະສານງານເຂດ)
- **ກອງປະຊຸມພົບປະສະມາຄົມບ້ານ** ພ້ອມທັງປະເມີນຄວາມຕ້ອງການ ແລະ ບູລິມະສິດບ້ານ (ລວມທັງການຄັດເລືອກເອົາຕົວແທນບ້ານ ເພື່ອເປັນຕົວແທນ ນຳສະເຫນີຄວາມຕ້ອງການຂອງບ້ານໃນຂັ້ນຕໍ່ໄປ)
- **ກອງປະຊຸມຈັດ ລຽງບູລິມະສິດ ຂັ້ນເຂດ** ຂອງ ຊາວບ້ານ (ລວມທັງ ການຄັດເລືອກເອົາຕົວແທນຂັ້ນເຂດ, ທີມງານຈັດຊື້-ຈັດຈ້າງ ຂັ້ນເຂດ ແລະ ທີມຈັດຕັ້ງປະຕິບັດຂັ້ນເຂດ)
- **ກອງປະຊຸມ ຈັດລຽງບູລິມະສິດ ຂັ້ນເມືອງ** (ລວມທັງການຮ່າງແຜນເພື່ອແບ່ງທຶນ ແລະ ຕົກລົງຮັບຮອງເອົາແຜນດັ່ງກ່າວ ພ້ອມດຽວກັນນັ້ນ ກໍ່ລວບລວມເອົາແຜນດັ່ງກ່າວ ແລະ ແຜນກິດຈະກຳຕ່າງໆທີ່ມີການຈັດຕັ້ງຢູ່ໃນເມືອງ), ການກະກຽມບົດສະເຫນີໂຄງການ (ມີການປະເມີນ ແລະ ອອກແບບຢ່າງລະອຽດ, ການກະກຽມ ງົບປະມານເພື່ອຈັດຕັ້ງປະຕິບັດ ແລະ ຕັດສິນ ກ່ຽວກັບ ວິທີການຈັດຊື້-ຈັດຈ້າງ, ແລະ ອື່ນໆ). ກອງປະຊຸມຮັບຮອງຂັ້ນເຂດ ຖືກຈັດຂຶ້ນເພື່ອຮັບປະກັນຄວາມເຂົ້າໃຈຂອງຊາວບ້ານ ແລະ ໃຫ້ຊາວບ້ານສາມາດຍອມຮັບແຜນ ເພື່ອຈັດຕັ້ງປະຕິບັດ
- **ກອງປະຊຸມຕັດສິນຂັ້ນເມືອງ** ຖືກຈັດຂຶ້ນເພື່ອແຈ້ງຜົນຂອງການຕັດສິນບົດສະເຫນີໂຄງການຍ່ອຍ
- **ການກະກຽມການຈັດຕັ້ງປະຕິບັດໂຄງການຍ່ອຍ** (ລວມທັງການຝຶກອົບຮົມໃຫ້ຄູ່ຫນ່ວມງານຂັ້ນບ້ານ ແລະ ເຂດ ຕາມຫນ້າວຽກທີ່ພວກເຂົາຕ້ອງຈັດຕັ້ງປະຕິບັດຮ່ວມກັບ ທລຍ ເຊັ່ນ: ການຄຸ້ມຄອງການເງິນ, ການຈັດຊື້-ຈັດ ຈ້າງ, ການກໍ່ສ້າງ ແລະ ອື່ນໆ ແລະ ການປ່ອຍທຶນງວດທຳອິດ)
- **ການຈັດຕັ້ງປະຕິບັດ ກິດຈະກຳໂຄງການຍ່ອຍ** (ລວມທັງການຕິດຕາມຕ່າງໆ ເພື່ອໃຫ້ສາມາດກວດສອບໄດ້)
- **ຝຶກອົບຮົມການຈັດຕັ້ງປະຕິບັດ ແລະ ການບູລະນະ, ການມອບ-ຮັບໂຄງການຍ່ອຍ ແລະ ການປະເມີນຜົນໂຄງການ ຍ່ອຍ**

ອົງປະກອບ ຢູ່ໃນວົງຈອນນີ້ ໂດຍສະເພາະ ການປະເມີນຄວາມຕ້ອງການ ແລະ ບູລິມະສິດບ້ານ ຈະຖືກຈັດຕັ້ງຄືນອີກໃນແຕ່ລະປີ ຍ້ອນວ່າຍັງມີງົບປະມານຈັດແບ່ງໃຫ້ເມືອງເປົ້າຫມາຍ.

ແຕ່ລະບ້ານຢູ່ໃນເມືອງໂຄງການ ຂອງ ທລຍ ໄດ້ຖືກເຊີນໃຫ້ເຂົ້າຮ່ວມກິດຈະກຳຕາມວົງຈອນກິດຈະກຳ ຂອງ ທລຍ ແລະ ແຕ່ລະບ້ານມີສິດໄດ້ຮັບທຶນ ຈາກ ທລຍ. ເຖິງວ່າຈະມີການຈັດລຽງບູລິມະສິດຄວາມຕ້ອງການທັງຫມົດ ຂອງເມືອງ, ການຊ່ວຍເຫລືອແມ່ນໄດ້ເລັ່ງໃສ່ບ້ານທີ່ທຸກຍາກທີ່ສຸດ.

## 1.2. ສັງລວມກິດຈະກຳ ທລຍ ຢູ່ໃນ 10 ເມືອງ

ຜົນກອງປະຊຸມຕັດສິນຂັ້ນເມືອງໃນເບື້ອງຕົ້ນຢູ່ທັງຫມົດ 10 ເມືອງ ພົບວ່າມີຈຳນວນ 249 ໂຄງການຍ່ອຍ ໄດ້ຖືກກະກຽມຈັດຕັ້ງປະຕິບັດໃນຮອບວຽນ I. ແຕ່ຈຳນວນໂຄງການຍ່ອຍໄດ້ມີການປັບປຸງພາຍຫລັງກອງປະຊຸມດັ່ງກ່າວ. ໃນປັດຈຸບັນ, ຈຳນວນໂຄງການຍ່ອຍທີ່ໄດ້ຖືກຈັດຕັ້ງປະຕິບັດມີຢູ່ 248 ໂຄງການຍ່ອຍ. ໃນທ້າຍເດືອນມິຖຸນາ ຈຳນວນ 195 ໂຄງການຍ່ອຍ (78%) ຂອງ 248 ກຳລັງຖືກຈັດຕັ້ງຢ່າງຂຸ້ນຂ້ຽວ, ໃນນັ້ນສຳເລັດແລ້ວ ຈຳນວນ 40 ໂຄງການຍ່ອຍ ຫລື 16%. ຈຳນວນ 13 ໂຄງການຍ່ອຍຍັງບໍ່ທັນໄດ້ເລີ້ມ ຍ້ອນວ່າມີຫລາຍເຫດຜົນ ເຊັ່ນ: ເວລາບໍ່ພຽງພໍ, ບໍ່ສາມາດຊອກຫາບໍລິສັດຮັບເຫມົາທີ່ຮັບວຽກຂະຫນາດໃຫຍ່ຢູ່ໃນທ້ອງຖິ່ນໄດ້, ການຈັດຊື້-ຈັດຈ້າງທີ່ເຮັດໂດຍຊຸມຊົນເອງຍັງຊັກຊ້າ, ແລະ ການຈັດຊື້ອຸປະກອນທີ່ທັນສະໄຫມຕ້ອງໄດ້ໃຫ້ທາງ ທລຍ ຂັ້ນສູນກາງຊ່ວຍເຫລືອ ແລະ ຕ້ອງໄດ້ຜ່ານການເຫັນດີຈາກທະນາຄານໂລກ.

ຄວາມຄືບໜ້າໂຄງການຍ່ອຍແມ່ນດຳເນີນໄປໄດ້ດີຢູ່ໃນແຂວງຫົວພັນ, ຈຳນວນ 24 (30%) ຂອງຈຳນວນ 79 ໂຄງການຍ່ອຍຢູ່ສະເພາະແຂວງຫົວພັນໄດ້ເຮັດສຳເລັດ. ສຳລັບແຂວງສະຫວັນນະເຂດ ສາມາດເຮັດສຳເລັດໄດ້ 14 (23%) ຂອງຈຳນວນ 62 ໂຄງການຍ່ອຍຢູ່ສະເພາະແຂວງສະຫວັນນະເຂດ. ແຂວງຈຳປາສັກ ສາມາດເຮັດສຳເລັດໄດ້ 2 (2%) ຂອງຈຳນວນ 107 ໂຄງການຍ່ອຍຢູ່ສະເພາະແຂວງຈຳປາສັກ.

ເມືອງສົບເບົາ ແຂວງຫົວພັນ ເປັນເມືອງທີ່ສາມາດຈັດຕັ້ງປະຕິບັດໄດ້ດີ ໂດຍເຮັດສຳເລັດໄດ້ 16 (76%) ຂອງຈຳນວນ 21 ໂຄງການຍ່ອຍ. ແຕ່ຈຳນວນໂຄງການຍ່ອຍອື່ນໆທີ່ບໍ່ທັນສຳເລັດນັ້ນ ກໍ່ກຳລັງຊຸ້ນຊ້ຽວຈັດຕັ້ງປະຕິບັດໃນຂະນະນີ້. ສາຍເຫດຂອງຄວາມລ້າຊ້ານັ້ນ (ແຂວງສະຫວັນນະເຂດ ແລະ ຈຳປາສັກ) ແມ່ນເນື່ອງມາຈາກກິດຈະກຳຂຸດເຈາະນ້ຳບາດານ ຊຶ່ງກວມເອົາເຖິງ 50% ຂອງ ກິດຈະກຳທັງໝົດ, ແລະ ຂັ້ນຕອນທັງໝົດໃນການຈັດຕັ້ງປະຕິບັດກິດຈະກຳນ້ຳບາດານຕ້ອງໄດ້ຮັບການເຫັນດີຈາກທາງທະນາຄານໂລກ.

ນັບແຕ່ເດືອນທັນວາ 2003 ຫາທ້າຍເດືອນມິຖຸນາ 2004, ຈຳນວນ 456,458.82 ໂດລາສະຫະລັດ ຫລື 48% ໄດ້ຖືກໂອນຈາກ ທລຍ ຫາ ບັນຊີເຂດ ເພື່ອຈັດຕັ້ງປະຕິບັດໂຄງການຍ່ອຍໃນຮອບວຽນ I. ເບິ່ງຢູ່ເອກະສານຊ້ອນທ້າຍ 1: ສັງລວມການເບີກຈ່າຍງົບປະມານໂຄງການຍ່ອຍ ແລະ ຄວາມຄືບໜ້າ - ຮອບວຽນ I.

## 2. ການຈັດຕັ້ງປະຕິບັດໂຄງການຍ່ອຍ - ລາຍລະອຽດ ແລະ ຜົນໄດ້ຮັບ

## 2.1. ການຊີ້ນຳໂຄງການຍ່ອຍທີ່ກຳລັງຈັດຕັ້ງປະຕິບັດ

### *ຂໍ້ມູນໂຄງການຍ່ອຍ ແລະ ຕົວເລກ ຈາກ ກອງປະຊຸມຕັດສິນຂັ້ນເມືອງ ໃນຮອບວຽນ I*

ບົດບາດລາຍງານຄວາມຄືບໜ້າ ເດືອນມັງກອນ - ມີນາ 2004 ປະຈຳໄຕມາດ ໄດ້ນຳສະເໜີຂໍ້ມູນເບື້ອງຕົ້ນຈາກກອງປະຊຸມຕັດສິນຂັ້ນເມືອງ. ໃນນັ້ນ ຈຳນວນ 251 ຢູ່ໃນ 121 ເຂດ ໃນ 10 ເມືອງ ໄດ້ຖືກຮັບຮອງເຂົ້າໃນງົບປະມານເພື່ອຈັດຕັ້ງປະຕິບັດ ແຕ່ເມື່ອກວດຈຳນວນຕົວເລກຄືນໃໝ່ ພົບວ່າຈຳນວນໂຕເລກໂຄງການຍ່ອຍໄດ້ມີການປ່ຽນແປງ[1]. ຈຳນວນທີ່ໄດ້ກວດຄືນໃໝ່ແມ່ນມີທັງໝົດຈຳນວນ 249 ໂຄງການຍ່ອຍ ຊຶ່ງໄດ້ສະຫລຸບໄວ້ຢູ່ໃນຕາຕະລາງ 1. ຢູ່ໃນຊ່ວງຈັດຕັ້ງປະຕິບັດໂຄງການຍ່ອຍ ພາຍຫລັງສຳເລັດກອງປະຊຸມຕັດສິນຂັ້ນເມືອງ ກໍ່ໄດ້ມີປ່ຽນຈຳນວນໂຄງການຍ່ອຍຕາມຄວາມຈຳເປັນ ໂດຍສະເພາະປະເພດຂອງໂຄງການ.

### *ບາງຕົວຢ່າງທີ່ຖືກປ່ຽນແປງ ແລະ ເຫດຜົນໃນການປ່ຽນແປງ ມີດັ່ງນີ້:*

ກອງປະຊຸມຕັດສິນ ຂອງ ເມືອງເຊໂປນ (ສະຫວັນນະເຂດ), ທລຍ ໄດ້ອະນຸມັດທຶນສຳລັບເຮັດການກໍ່ສ້າງສຸກສາເພື່ອຮັບໃຊ້ 9 ໝູ່ບ້ານທີ່ຢູ່ຫ່າງໄກສອກຫລີກ. ແຕ່ໃນນັ້ນ ໄດ້ມີເລື່ອງສຸຂະພາບເຂົ້າຮ່ວມ ແລະ ບໍ່ໄດ້ທັກທ້ວງວ່າໄດ້ມີໂຄງການສ້າງສຸກສາຢູ່ເຂດນັ້ນແລ້ວ, ສະນັ້ນ ເມື່ອ ທລຍ ໄດ້ທົບທວນ "ແຜນລຶບລ້າງຄວາມທຸກຍາກ" ຫລື "ຍຸດທະສາດລຶບລ້າງຄວາມທຸກຍາກ ແລະ ການຂະຫຍາຍຕົວຂອງປະເທດ" ເຫັນວ່າໂຄງການສ້າງສຸກສາລາໄດ້ມີແຜນໄວ້ແລ້ວ. ຈາກນັ້ນ ທລຍ ຈຶ່ງໄດ້ປຶກສາຫາລື ກັບ ອຳນາດການປົກຄອງ ຂອງ ແຂວງ ແລະ ເຂດ ກ່ຽວກັບບັນຫາດັ່ງກ່າວ ເພື່ອເຈລະຈາປ່ຽນແປງໂຄງການ. ໃນທີ່ສຸດຊາວບ້ານໄດ້ຕົກລົງເອົາຫໍພັກສຳລັບຄົນເຈັບ/ພີ່ນ້ອງຄົນເຈັບ/

[1] ຕົວຢ່າງ: ໂຄງການຍ່ອຍ ກ່ຽວກັບ ການຝຶກອົບຮົມຄູ ຢູ່ ເມືອງເຊໂປນ ຈຳນວນ 5 ຄົນ ໃນ 4 ເຂດ ແມ່ນມີການນັບຈຳນວນຜິດພາດໂດຍຜູ້ຮັບຜິດຊອບຂໍ້ມູນ ຢູ່ຂັ້ນສູນກາງ ເພາະຄວາມຈິງແລ້ວ ຕ້ອງນັບ 4 ໂຄງການຍ່ອຍດັ່ງກ່າວເຂົ້າເປັນໂຄງການດຽວ ເພື່ອຈະໃຫ້ເປັນເຂດດຽວ ເປັນຕົວແທນໃຫ້ 4 ໂຄງການຍ່ອຍ ຫລື ເຂດ ຮັບຜິດ ຊອບໂຄງການຍ່ອຍ ແລະ ຈຳນວນ 5 ຄົນ ຈະໄປຝຶກອົບຮົມໃນເວລາ, ຈຸດດຽວກັນ.

ແພດ. ທຶນ ຂອງ ທລຍໄດ້ຖືກຈັດແບ່ງໃຫ້ເປັນເບ້ຍລ້ຽງຂອງແພດ / ພະຍາບານ. ແຕ່ວ່າການປ່ຽນແປງດັ່ງກ່າວ ຍັງບໍ່ແມ່ນການຕັດສິນເທື່ອສຸດທ້າຍ ເພາະໄດ້ມີການປ່ຽນແປງໂຄງການຍ່ອຍ ຈາກ ຫໍພັກ ແລະ ເບ້ຍລ້ຽງໃຫ້ແພດ / ພະຍາບານ ເປັນ ລະບົບ ໄຟຟ້າແສງຕາເວັນ ສຳລັບ ຕູ້ເຢັນ ແລະ ເຄື່ອງສ່ອງຈຸລະທັດ ຂອງ ສຸກສາລາ ພ້ອມທັງເປັນແສງສະຫວ່າງໃຫ້ສຸກສາລາ.

ສຳລັບ ເມືອງນອງ (ສະຫວັນນະເຂດ), ແຜນເຮັດລະບົບນ້ຳລິນ ສຳລັບ 7 ຫມູ່ບ້ານທີ່ຢູ່ຫ່າງໄກສອກຫລີກ ກໍ່ໄດ້ມີການປ່ຽນແປງ ຍ້ອນເງື່ອນໄຂດ້ານວິຊາການບໍ່ພຽງພໍ. ສະນັ້ນ ຈຶ່ງໄດ້ປ່ຽນເປັນທາງຊົນນະບົດ ໂດຍການຕົກລົງເຫັນດີລະຫວ່າງ ຊຸມຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ. ເຫດຜົນນີ້ ເຮັດໃຫ້ຈຳນວນໂຄງການຍ່ອຍຫລຸດລົງ ເນື່ອງຈາກໃນເບື້ອງ ຕົ້ນໄດ້ຄິດໄລ່ລະບົບນ້ຳລິນ ຄື: 1 ໂຄງການຍ່ອຍເປັນການກໍ່ສ້າງໂຄງຮ່າງ ແລະ ຕິດຕັ້ງທໍ່ວກ໋ອກ ແລະ ອີກ 1 ໂຄງ ການແມ່ນເປັນອຸປະກອນເສີມ.

ນອກຈາກການປ່ຽນແປງປະເພດໂຄງການຍ່ອຍແລ້ວ, ຊື່ຂອງບາງໂຄງການຍ່ອຍກໍ່ໄດ້ຖືກປັບປ່ຽນເຊັ່ນດຽວກັນ ເພື່ອໃຫ້ມີຄວາມຊັດເຈນຂຶ້ນ, ຕົວຢ່າງ: ໃນເຂດທີ່ໄດ້ຮັບທັງທຶນທາງ ແລະ ຂົວ ໄດ້ກຳນົດເປັນໂຄງການດຽວ ຄື: "ປັບປຸງທາງຊົນນະບົດ" ເຫັນວ່າຈະເປັນການຍາກໃນການຕິດຕາມ ແລະ ກວດກາ, ຈຶ່ງໄດ້ປ່ຽນເປັນ "ປັບປຸງທຶນທາງຊົນນະບົດ ແລະ ຂົວ" ເພື່ອໃຫ້ກວດກາງ່າຍຂຶ້ນ.

ເຖິງແມ່ນວ່າ ໃນຂະນະນີ້ຈະມີຈຳນວນໂຄງການຍ່ອຍກຳລັງຈັດຕັ້ງປະຕິບັດຢູ່ກໍ່ຕາມ ແຕ່ກໍ່ອາດຈະມີການປ່ຽນແປງຈຳນວນໂຄງການຍ່ອຍຕື່ມ. ຕົວຢ່າງ: ແຂວງສະຫວັນນະເຂດໄດ້ລວມໂຄງການຍ່ອຍ "ນ້ຳສ້າງຂຸດ" ກັບ "ນ້ຳບາດານ" ເປັນໂຄງການດຽວ ເນື່ອງຈາກວ່າພົບບັນຫາດ້ານວິຊາການຂຸດເຈາະ. ທລຍ ຈະເຮັດລາຍງານກ່ຽວກັບທຸກໆການປ່ຽນແປງຂອງຈຳນວນໂຄງການຍ່ອຍ.

<u>ບົດຮຽນຖອດຖອນໄດ້ ຈາກ ຂໍ້ມູນກອງປະຊຸມຕັດສິນຂັ້ນເມືອງ</u>

ຍັງພົບຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດລະບົບທັງຫມົດ ຊຶ່ງເປັນລະບົບໃຫມ່ ແຕ່ດຳເນີນໄດ້ໃນເວລາສັ້ນໆ. ສ່ວນໃຫຍ່ແລ້ວ ລະບົບຕ້ອງໄດ້ມີການທົດສອບ ແລະ ທົດລອງຫລາຍຄັ້ງ ກ່ອນເຂົ້າໃຈ ແລະ ສາມາດແກ້ໄຂບັນຫາໄດ້. ຖ້າຫາກມີເວລາ ແລະ ການວິໃຈຂໍ້ມູນ ຈະຊ່ວຍປ້ອງກັນຄວາມຜິດພາດທີ່ຈະເກີດຂຶ້ນຢູ່ໃນທຸກຂັ້ນ.

ການປະເມີນ, ການສຳຫລວດ ແລະ ອອກແບບໂຄງການຍ່ອຍ ຄວນຈະເຮັດສຳເລັດກ່ອນຈະຈັດກອງປະຊຸມຕັດສິນຂັ້ນເມືອງ.

**ຕາຕະລາງ 1. ສະຫລຸບຂໍ້ມູນໂຄງການຍ່ອຍ ຈາກ ການປະເມີນຄວາມຕ້ອງການ ທີ່ເປັນບູລິມະສິດ ຂອງ ບ້ານ (VNPA) ຂອງ 3 ແຂວງ ແລະ ຈາກ ຜົນກອງປະຊຸມຕັດສິນຂັ້ນເມືອງ ຂອງ ເດືອນມິຖຸນາ 2003 ຫາ ເດືອນ ມີນາ 2004 ທີ່ໄດ້ຂຶ້ນແຜນໄວ້ ເພື່ອຈັດຕັ້ງ ປະຕິບັດ 2003-2004**

| ແຂວງ / ເມືອງ | ຈຳນວນ ບ້ານ | ຈຳນວນຄົນ 2003 | ຈຳນວນ ຜູ້ໃຫຍ່ ເຂົ້າຮ່ວມ VNPA | % ຜູ້ໃຫຍ່ ເຂົ້າຮ່ວມ VNPA | ຈຳນວນບ້ານ ໄດ້ຮັບຜົນ ປະໂຫຍດ ຈາກ PRF | % ບ້ານໄດ້ຮັບ ຜົນປະໂຫຍດ | ຈຳນວນ ບ້ານທຸກຍາກ ໄດ້ຮັບຜົນ ປະໂຫຍດ | % ບ້ານທຸກຍາກ ໄດ້ຮັບຜົນປະ ໂຫຍດ | ຈຳນວນ ເຂດ | ຈຳນວນ ໂຄງການ ຍ່ອຍ | ຈຳນວນ ບ້ານທີ່ຕ້ອງ ການຄວາມ ຊ່ວຍເຫລືອ | ຈຳນວນກິດຈະ ກຳ ຈາກ ຜົນ VNPA, 36 ຄວາມຕ້ອງ ການ ຕໍ່ ບ້ານ | % ຄວາມ ຕ້ອງການ ບູລິມະສິດ ຈັດຕັ້ງ ໃນ ຮອບວຽນ I | ງົບປະມານ ຂອງ ທລຍ (ກີບ) | ສະເລ່ຍ ງົບປະມານ ຂອງ ທລຍ (USD) | ສະເລ່ຍ ງົບປະມານ ຕໍ່ ໂຄງການຍ່ອຍ (USD) |
|---|---|---|---|---|---|---|---|---|---|---|---|---|---|---|---|---|
| **ຫົວພັນ** | | | | | | | | | | | | | | | | |
| ສົບເບົາ | 75 | 26,061 | 11,471 | 78% | 32 | 43% | 31 | 97% | 7 | 21 | 25 | 286 | 9% | 1,208,461,936 | 120,850 | 5,755 |
| ແອດ | 76 | 25,942 | 12,279 | 84% | 54 | 71% | 46 | 85% | 12 | 33 | 50 | 269 | 19% | 1,177,815,985 | 113,475 | 3,439 |
| ຊຽງຄໍ້ | 64 | 25,125 | 9,333 | 66% | 34 | 53% | 28 | 82% | 12 | 25 | 33 | 219 | 15% | 1,150,064,959 | 110,850 | 4,434 |
| ***ລວມ*** | ***215*** | ***77,128*** | ***33,083*** | **76%** | ***120*** | 56% | ***105*** | 88% | ***31*** | ***79*** | ***108*** | ***774*** | **14%** | ***3,536,342,880*** | ***345,175*** | **4,369** |
| **ສະຫວັນນະເຂດ** | | | | | | | | | | | | | | | | |
| ເຊໂປນ | 159 | 40,949 | 11,984 | 52% | 103 | 65% | 91 | 88% | 20 | 32 | 81 | 640 | 13% | 1,863,665,889 | 179,010 | 5,594 |
| ນອງ | 79 | 20,133 | 8,019 | 71% | 27 | 34% | 26 | 96% | 10 | 12 | 25 | 323 | 8% | 989,915,979 | 92,011 | 7,668 |
| ວິລະບູລີ | 101 | 28,576 | 10,333 | 64% | 62 | 61% | 43 | 69% | 16 | 19 | 52 | 377 | 14% | 1,131,693,228 | 108,808 | 5,727 |
| ***ລວມ*** | ***339*** | ***89,658*** | ***30,336*** | **60%** | ***192*** | 57% | ***160*** | 83% | ***46*** | ***63*** | ***158*** | ***1,340*** | **12%** | ***3,985,275,096*** | ***379,829*** | **6,029** |
| **ຈຳປາສັກ** | | | | | | | | | | | | | | | | |
| ມູນລະປະໂມກ | 67 | 37,101 | 7,018 | 34% | 48 | 72% | 39 | 81% | 10 | 29 | 57 | 270 | 21% | 713,147,992 | 67,914 | 2,342 |
| ໂຂງ | 137 | 72,746 | 15,905 | 39% | 76 | 55% | 29 | 38% | 14 | 32 | 80 | 499 | 16% | 1,041,859,029 | 102,200 | 3,194 |
| ສຸຂຸມາ | 62 | 45,765 | 7,962 | 31% | 49 | 79% | 30 | 61% | 10 | 22 | 55 | 231 | 24% | 928,598,850 | 90,874 | 4,131 |
| ປະທຸມພອນ | 93 | 49,670 | 7,024 | 25% | 73 | 78% | 33 | 45% | 10 | 24 | 100 | 337 | 30% | 858,786,826 | 83,939 | 3,497 |
| ***ລວມ*** | ***359*** | ***205,282*** | ***37,909*** | **33%** | ***246*** | 69% | ***131*** | 53% | ***44*** | ***107*** | ***292*** | ***1,337*** | **22%** | ***3,542,392,697*** | ***344,927*** | **3,224** |
| **ລວມທັງຫມົດ** | **913** | **372,068** | **101,328** | **48%** | **558** | **61%** | **396** | **71%** | **121** | **249** | **558** | **3,451** | **16%** | **11,064,010,673** | **1,069,931** | **4,297** |

**ການວິເຄາະບາງຂໍ້ມູນ ຈາກ ຕາຕະລາງ 1.**

**ຈຳນວນຄົນ:** ຈຳນວນພົນລະເມືອງ ໃນ ສປປ ລາວ ໄດ້ກຳນົດເອົາຈຳນວນຂອງຄົນ ທີ່ຢູ່ໃນເກນອາຍຸ 15 ປີ ຫລື ຫລາຍກ່ວານັ້ນ. ສະເລ່ຍແລ້ວ ປະມານ 56.4 % ຂອງ ພົນລະເມືອງຢູ່ໃນເກນອາຍຸ 15 ປີ ຫລື ຫລາຍກ່ວານັ້ນ. ຈຳນວນເປົ້າໝາຍ ຂອງ ຜູ້ເຂົ້າຮ່ວມ VNPA ຢ່າງໜ້ອຍມີເຖິງ 50% ຊຶ່ງສະແດງໃຫ້ເຫັນຜົນໄດ້ຮັບທີ່ຄາດໄວ້ ຢູ່ ແຂວງ ຫົວພັນ, ສະ ຫວັນນະເຂດ, ແຕ່ຜູ້ເຂົ້າຮ່ວມແຂວງຈຳປາສັກ ຊໍ້າພັດຫລຸດຄາດໝາຍ.

**ຈຳນວນບ້ານທີ່ໂຄງການກວມເອົາ:** ຈຳນວນບ້ານທີ່ໄດ້ຮັບຜົນປະໂຫຍດ ຈາກ ທລຍ ໃນຮອບວຽນທຳອິດ ມີສູງເຖິງ 61% ຂອງຈຳນວນ 10 ເມືອງທັງໝົດ ແລະ ສົມທຽບຈຳນວນ 3 ແຂວງ ແມ່ນ ແຂວງຈຳປາສັກ ກວມເອົາຈຳນວນບ້ານຫລາຍກ່ວາ ໝູ່ ຊຶ່ງມີເຖິງ 69%.

**ເປົ້າໝາຍບ້ານທຸກຍາກ:** ເປົ້າໝາຍບ້ານທຸກຍາກ (ສະເລ່ຍຈຳນວນບ້ານທຸກຍາກໃນຈຳນວນບ້ານທີ່ໄດ້ຮັບຜົນປະໂຫຍດ) ແມ່ນມີຫລາຍຢູ່ແຂວງຫົວພັນ ແລະ ສະຫວັນນະເຂດ, ແຕ່ຫລາຍທີ່ສຸດ 88 % ແມ່ນ ຢູ່ແຂວງຫົວພັນ, ໃນນັ້ນ, ຈຳນວນບ້ານທຸກຢູ່ເມືອງສົບເບົາ ແມ່ນກວມເອົາເຖິງ 88% ແລະ ສະຫັວນນະເຂດ (97%), ແຕ່ແຂວງຈຳປາສັກ ຊຶ່ງຢູ່ເມືອງໂຂງ ມີພຽງແຕ່ 38%.

**ການສະໜອງຄວາມຕ້ອງການ ຂອງ ປະຊາຊົນ:** ໃນກໍລະນີທີ່ຊາວບ້ານບໍ່ໄດ້ສະເໜີຂໍກິດຈະກຳໃດນຶ່ງສະເພາະ (ແຕ່ວ່າ ທລຍ ກໍ່ໄດ້ເອົາບ້ານເຫລົ່ານັ້ນເຂົ້າໃນຂະບວນການ ຂອງ ທລຍ ແລ້ວ), ເພາະສະນັ້ນ, ປະມານ 16% ຂອງ ຄວາມຕ້ອງການສະເໜີຈາກຊາວບ້ານ (558 ຄວາມຕ້ອງການຂອງບ້ານ ຈາກ ຈຳນວນກິດຈະກຳທັງໝົດ 3,451 ທີ່ຖືກຂໍຈາກບ້ານ) ຖືກຈັດຕັ້ງປະຕິບັດໃນຮອບວຽນ 1. ອີງຕາມຂໍ້ມູນໃນປັດຈຸບັນ ອີກປະມານ 6 ປີ ງົບປະມານຈະສາມາດຈັດຕັ້ງປະຕິບັດກິດຈະກຳທັງໝົດໃຫ້ຊາວບ້ານໄດ້. ຖ້າມີການປະກອບທຶນຕື່ມໃຫ້ແຕ່ລະເມືອງ ຈະເຮັດໃຫ້ ທລຍ ສາມາດສະໜອງຄວາມຕ້ອງການຊາວບ້ານໄດ້ໄວຂຶ້ນ.

**ສະເລ່ຍມູນຄ່າແຕ່ລະໂຄງການຍ່ອຍ:** ສະເລ່ຍມູນຄ່າໂຄງການຍ່ອຍແຕ່ລະໂຄງການໃນການຈັດຕັ້ງປະຕິບັດຕົວຈິງ ແມ່ນຕົກຢູ່ປະມານ 4,297 ໂດລາສະຫະລັດ ຊຶ່ງມີມູນຄ່ານ້ອຍກ່ວາທີ່ໄດ້ກຳນົດໄວ້ຢູ່ໃນຄູ່ມືຈັດຕັ້ງປະຕິບັດໂຄງການ ຄື 5,400 ໂດລາສະຫະລັດ.

ມູນຄ່າຂອງບາງໂຄງການຍ່ອຍ, ຕົວຢ່າງ: ຝຶກອົບຮົມການສ້າງລາຍຮັບ ແລະ ການກໍ່ສ້າງນ້ຳສ້າງຊຸດ ແລະ ນ້ຳບາດານ (ມີຫລາຍ ຢູ່ແຂວງຈຳປາສັກ) ແມ່ນມີມູນຄ່າຕ່ຳ. ສຳລັບການກໍ່ສ້າງໂຄງການຍ່ອຍທີ່ມີມູນຄ່າທີ່ສູງ ແມ່ນໄດ້ແກ່ການກໍ່ສ້າງລະບົບນ້ຳລິນ (ມີຫລາຍ ຢູ່ແຂວງຫົວພັນ) ແລະ ທາງ, ຂົວ (ມີຫລາຍ ຢູ່ແຂວງສະຫວັນນະເຂດ)

## *ການເກັບກຳ ຕິດຕາມຂໍ້ມູນໂຄງການຍ່ອຍປະຈຳເດືອນ*

ການຝຶກອົບຮົມກ່ຽວກັບການເກັບກຳຂໍ້ມູນໂຄງການຍ່ອຍ ສຳລັບ ພະນັກງານ ທລຍ ພາກສະໜາມ ແລະ ຜູ້ປະສານງານເຂດ ໄດ້ຈັດຂຶ້ນໃນເດືອນພຶດສະພາ 2004 ຢູ່ເມືອງເຊໂປນ, ມູນລະປະໂມກ ແລະ ສົບເບົາ ຊຶ່ງເປັນ 3 ເມືອງເລີ້ມຕົ້ນ ຂອງ ໂຄງການ ແລະ ມີຫລາຍໂຄງການຍ່ອຍກຳລັງຖືກຈັດຕັ້ງປະຕິບັດ. ການຝຶກອົບຮົມ ໄດ້ດຳເນີນໄປເປັນເວລາ 2 ວັນເຕັມ ຢູ່ ໃນແຕ່ລະເມືອງ. ການດຳເນີນການຝຶກອົບຮົມ ແລະ ແນະນຳແບບຟອມ "ການຕິດຕາມໂຄງການຍ່ອຍປະຈຳເດືອນ" ໃຫ້ແກ່ພະນັກງານ ທລຍ ແຂວງ ແລະ ເມືອງ ແມ່ນໄດ້ດຳເນີນໂດຍພະນັກງານ ທລຍ ຂັ້ນສູນກາງ. ຫລັງຈາກນັ້ນ, ພະນັກງານຕິດຕາມ ແລະ ກວດກາ ຂັ້ນແຂວງ ແລະ ພະນັກງານອື່ນໆຂັ້ນເມືອງທີ່ໄດ້ຮັບການ

ຝຶກອົບຮົມແລ້ວນັ້ນ ເປັນຜູ້ດຳເນີນຝຶກອົບຮົມຄັ້ງຕໍ່ໄປໃຫ້ບັນດາປະສານງານເຂດທີ່ຍັງບໍ່ໄດ້ເຂົ້າຮ່ວມ. ຕາຕະລາງ 2 ແມ່ນການນຳສະເໜີຂໍ້ມູນຂອງຈຳນວນຜູ້ເຂົ້າຮ່ວມຝຶກອົບຮົມ.

ສຳລັບຜູ້ປະສານງານເຂດ ຜູ້ທີ່ບໍ່ສາມາດມາເຂົ້າຮ່ວມການຝຶກອົບຮົມໄດ້ນຳ ແມ່ນຍ້ອນຫຍຸ້ງຍາກໃນການເດີນທາງ, ນ້ຳຖ້ວມ, ເຈັບເປັນ ແລະ ອື່ນໆ. ສະນັ້ນ, ພະນັກງານ ທລຍ ຂັ້ນແຂວງ ແລະ ເມືອງ ຈະໄດ້ຈັດຝຶກອົບຮົມອີກຕື່ມໃຫ້ແກ່ຜູ້ປະສານງານເຂດເຫລົ່ານັ້ນ ເພື່ອຝຶກໃຫ້ເຂົາເຈົ້າສາມາດໃຊ້ແບບຟອມ ໃນການເກັບກຳຂໍ້ມູນໂຄງການຍ່ອຍ ຊ່ວຍ ທລຍ.

**ຕາຕະລາງ 2. ຈຳນວນຜູ້ເຂົ້າຮ່ວມການຝຶກອົບຮົມການຕິດຕາມ ແລະ ກວດກາໂຄງການຍ່ອຍ ຄັ້ງເດືອນພຶດສະພາ 2004**

| **ແຂວງ / ເມືອງ** | **ພະນັກງານ ທລຍ ເມືອງ / ແຂວງ** | | | **ຈຳນວນ ເຂດ** | **ຜູ້ປະສານງານ** | | |
|---|---|---|---|---|---|---|---|
| | **ຈຳນວນ ທັງໝົດ** | **ຈຳນວນຍິງ** | **% ຍິງ** | | **ຈຳນວນ ທັງໝົດ** | **ຈຳນວນຍິງ** | **% ຍິງ** |
| **ແຂວງ ຫົວພັນ** | | | | | | | |
| ສົບເບົາ | 14 | 3 | 21 % | 7 | 18 | 6 | 33 % |
| ແອດ | 4 | 1 | 25 % | 12 | 36 | 12 | 36 % |
| ຊຽງຄໍ້ | 5 | 2 | 40 % | 12 | 30 | 10 | 33 % |
| **ແຂວງ ສະຫວັນນະເຂດ** | | | | | | | |
| ເຊໂປນ | 17 | 4 | 23 % | 20 | 30 | 9 | 27 % |
| ນອງ | 5 | 2 | 40 % | 10 | 26 | 9 | 35 % |
| ວິລະບູລີ | 8 | 2 | 25 % | 16 | 25 | 4 | 16 % |
| **ແຂວງ ຈຳປາສັກ** | | | | | | | |
| ມູນລະປະໂມກ | 7 | 1 | 14 % | 10 | 26 | 7 | 27 % |
| ໂຂງ | 5 | 1 | 20 % | 14 | 35 | 12 | 34 % |
| ປະທຸມພອນ | 5 | 1 | 20 % | 10 | 22 | 8 | 36 % |
| ສຸຂຸມາ | 3 | 0 | 0 % | 10 | 18 | 7 | 39 % |
| ລວມ: | 73 | 17 | | 121 | 266 | 84 | |

ນອກຈາກການຝຶກອົບຮົມຜູ້ປະສານງານເຂດ, ກໍ່ຍັງມີກອງປະຊຸມວາງແຜນ ແລະ ການລາຍງານປະຈຳເດືອນ. ມາຮອດໄຕມາດນີ້ ຄຳເຫັນ / ບັນຫາ ຈາກກອງປະຊຸມດັ່ງກ່າວ ມີດັ່ງນີ້:

- ຜູ້ປະສານງານເຂດພົບຄວາມຫຍຸ້ງຍາກໃນການເດີນທາງເພື່ອໄປຕິດຕາມໂຄງການຍ່ອຍ ໂດຍສະເພາະບ່ອນທີ່ຢູ່ໃນເຂດຫ່າງໄກສອກຫລີກ.
- ຜູ້ປະສານງານເຂດຍິງ ໂດຍສະເພາະກຸ່ມຄົນສ່ວນນ້ອຍທີ່ມີຮີດຄອງປະເພນີ ມີອຸປະສັກໃນການເຮັດວຽກກັບ ທລຍ.
- ຜູ້ປະສານງານເຂດ ໃຫ້ຄຳເຫັນວ່າອັດຕາເບ້ຍລ້ຽງທີ່ພວກເຂົາໄດ້ຮັບແມ່ນບໍ່ພຽງພໍສຳລັບໃຊ້ຈ່າຍ ແລະ ຕ້ອງການໃຫ້ ທລຍ ທົບທວນຄືນໃໝ່.

ຜົນການຕິດຕາມໂຄງການຍ່ອຍໃນເທື່ອທຳອິດນັ້ນ ຈະສົ່ງມາພ້ອມຜູ້ປະສານງານແຂວງ ແລະ ພະນັກງານຕິດຕາມ ແລະ ກວດກາ ໃຫ້ຫ້ອງການຂັ້ນສູນກາງ ໃນເດືອນ ມິຖຸນາ, ບຸກຄົນເຫລົ່ານັ້ນ ຈະຂຶ້ນມາຝຶກອົບຮົມທີ່ຫ້ອງການຂັ້ນສູນ

ກາງກ່ຽວກັບລະບົບຂອງຫນ່ວຍງານຕິດຕາມ ແລະ ກວດກາ, ການນໍາໃຊ້ແບບຟອມ ແລະ ວິທີການເກັບກໍາຂໍ້ມູນ ພ້ອມທັງການນໍາໃຊ້ລະບົບຖານຂໍ້ມູນ ສໍາລັບ ແບບຟອມ ຕິດຕາມໂຄງການຍ່ອຍ.

## *ການເບີກຈ່າຍງົບປະມານໂຄງການຍ່ອຍ ແລະ ຄວາມຄືບຫນ້າໂຄງການຍ່ອຍ*

ໃນທ້າຍເດືອນທັນວາ 2003 ຮອດທ້າຍເດືອນມີຖຸນາ 2004, ທລຍ ໄດ້ໂອນເງິນຈໍານວນ 456,458.82 ໂດລາສະຫະລັດ ໃຫ້ບັນຊີຂອງເຂດ. ສະຫລຸບການເບີກຈ່າຍງົບປະມານໂຄງການຍ່ອຍ ແລະ ຄວາມຄືບຫນ້າຂອງແຕ່ລະໂຄງການຍ່ອຍ ຂອງ 10 ເມືອງ ໄດ້ນໍາສະເຫນີຢູ່ເອກະສານຄັດຕິດ 1.

ເມື່ອສົມທຽບການເບີກຈ່າຍງົບປະມານໂຄງການຍ່ອຍຂອງໄຕມາດນີ້ ແລະ ໄຕມາດກ່ອນນັ້ນ, ເຫັນວ່າອັດຕາການເບີກຈ່າຍມີຜົນໃຫ້ແກ່ຄວາມຄືບຫນ້າໂຄງການຍ່ອຍ. ເປີເຊັນງົບປະມານເບີກຈ່າຍເພີ້ມຂຶ້ນຈາກໄຕມາດກ່ອນ (35%) ເປັນ 48% ໃນໄຕມາດນີ້ ສໍາລັບ ຮອບວຽນ I.

ເອກະສານຄັດຕິດ 1 ສະແດງໃຫ້ເຫັນຄວາມຄືບຫນ້າການຈັດຕັ້ງປະຕິບັດໂຄງການຍ່ອຍ. ໃນນັ້ນແຂວງຫົວພັນ ເປັນແຂວງທີ່ມີຄວາມຄືບຫນ້າໄວກ່ວາແຂວງອື່ນ, ສໍາເລັດແລ້ວ ຈໍານວນ 24 ໂຄງການຍ່ອຍ ຫລື 30% ຂອງ ຈໍານວນ 79 ທັງຫມົດ. ຖ້າປຽບທຽບຄວາມຄືບຫນ້າຂອງແຂວງຫົວພັນ ກັບ ແຂວງສະຫວັນນະເຂດ ແລະ ຈໍາປາສັກ ຈະເຫັນ ວ່າ ໃນແຂວງສະຫວັນ ມີພຽງຈໍານວນ 14 ໂຄງການຍ່ອຍ ຫລື 23% ສາມາດສໍາເລັດ ຂອງ ຈໍານວນ 62 ທັງຫມົດຂອງແຂວງສະຫວັນນະເຂດ. ສໍາລັບ ແຂວງຈໍາປາສັກ ມີພຽງຈໍານວນ 2 ໂຄງການຍ່ອຍ ຫລື (2%) ສາມາດສໍາເລັດ ຈາກ ຈໍານວນ 107 ທັງຫມົດຂອງແຂວງຈໍາປາສັກ.

ເມືອງສົບເບົາ, ແຂວງ ຫົວພັນ ເປັນເມືອງທີ່ມີຄວາມຄືບຫນ້າຫລາຍກ່ວາເມືອງອື່ນໆ, ຈໍານວນ 16 ໂຄງການຍ່ອຍ ຫລື 76% ສາມາດສໍາເລັດ ຂອງ ຈໍານວນ 21 ທັງຫມົດຂອງເມືອງສົບເບົາ. ທລຍ ກໍາລັງເລັ່ງຈັດຕັ້ງປະຕິບັດໂຄງການຍ່ອຍອື່ນໆເພື່ອໃຫ້ສໍາ ເລັດທັນກັບຄາດຫມາຍ.

ເອກະສານຄັດຕິດ 2 ສະຫລຸບຂໍ້ມູນ ແລະ ຄວາມຄືບຫນ້າວຽກລວມຂອງແຕ່ລະເມືອງ (10 ເມືອງ).

ຄວາມຊັກຊ້າໃນການຈັດຕັ້ງປະຕິບັດ ຂອງ ບາງໂຄງການຍ່ອຍນັ້ນ ສ່ວນນຶ່ງແມ່ນກ່ຽວຂ້ອງກັບການໂອນເງິນໃຫ້ແກ່ໂຄງການຍ່ອຍ ແລະ ຍ້ອນຫ້ອງການ ທລຍ ແລະ ຂັ້ນທ້ອງຖິ່ນ. ສໍາລັບຂັ້ນທ້ອງຖິ່ນນັ້ນ, ຍ້ອນໄລຍະທາງ, ການໃຫ້ບໍລິການຂອງທະນາຄານຂັ້ນເມືອງ ແລະ ຄວາມຫຍຸ້ງຍາກອື່ນໆ. ສໍາລັບ ທລຍ ກໍ່ຍ້ອນຈໍານວນໂຄງການຍ່ອຍທີ່ມີຫລາຍລະບົບ ແລະ ຂັ້ນຕອນການປະກອບເອກະສານໂຄງການຍ່ອຍທີ່ນໍາໃຊ້ໃນປັດຈຸບັນ. ເພື່ອຊ່ວຍແກ້ໄຂບາງບັນຫາ, ທລຍ ໄດ້ດັດແປງຂັ້ນຕອນການຂໍອະນຸມັດງົບປະມານໂຄງການຍ່ອຍ ແຕ່ຖ້າຍັງມີບາງທ້ອງຖິ່ນທີ່ບໍ່ສາມາດປະຕິບັດໄດ້.

## *ການມອບ-ຮັບໂຄງການຍ່ອຍທີ່ເຮັດສໍາເລັດ*

ຍັງບໍ່ທັນມີໂຄງການຍ່ອຍໂຄງການໃດທີ່ໄດ້ມີການມອບ-ຮັບໂຄງການຢ່າງເປັນທາງການໃຫ້ແກ່ຊຸມຊົນ ຫລື ອໍານາດການປົກຄອງເມືອງ. ຕ້ອງໄດ້ມີການຝຶກອົບຮົມ ກ່ຽວກັບ ການຈັດຕັ້ງປະຕິບັດ ແລະ ບູລະນະຂອງແຕ່ລະໂຄງການຍ່ອຍໃຫ້ແກ່ຊຸມຊົນ (ທີມງານທີ່ໄດ້ຖືກຈັດຕັ້ງໄວ້) ໂດຍໄດ້ຮັບການຮ່ວມມືຈາກວິຊາການເມືອງ ແລະ ອໍານາດການປົກຄອງທ້ອງຖິ່ນ ກ່ອນຈະມີການມອບ-ຮັບຢ່າງເປັນທາງການ. ເມື່ອກິດຈະກໍາທຸກຢ່າງຂອງແຕ່ລະໂຄງການຍ່ອຍສໍາເລັດລົງ, ທລຍ ຈະມອບໃບຢັ້ງຢືນສໍາເລັດການຈັດຕັ້ງປະຕິບັດໂຄງການຍ່ອຍໃຫ້ແກ່ຊຸມຊົນ. ແຕ່ຖ້າມີຫລາຍໂຄງ

ການຍ່ອຍສຳເລັດລົງ ທລຍ ຈະມອບ-ຮັບບັນດາໂຄງການຍ່ອຍໃຫ້ແກ່ເຂດທີ່ສຳເລັດນັ້ນ ຢູ່ ແຕ່ລະເມືອງ ເພື່ອປະກາດຜົນຈັດຕັ້ງປະຕິບັດໂຄງການຍ່ອຍ.

ຊາວບ້ານທີ່ໄດ້ຮັບໂຄງການຍ່ອຍ ມີຄວາມດີໃຈໃນຜົນຂອງວຽກງານ ແລະ ມີໂອກາດໄດ້ນຳໃຊ້ໂຄງການລົງທຶນຂອງລັດ. ການຝຶກອົບຮົມຈັດຕັ້ງປະຕິບັດ ແລະ ບູລະນະໂຄງການຍ່ອຍ ໄດ້ນຳສະເຫນີຢູ່ພາກ 2.1. ກ່ຽວກັບການມີສ່ວນຮ່ວມຂອງຊາວບ້ານໃນການຂະບວນການ ທລຍ.

### *ຄຸນນະພາບໂຄງການຍ່ອຍ*

ການປະເມີນລະບົບຄຸ້ມຄອງໃນປັດຈຸບັນ ແລະ ຄຸນນະພາບໂຄງການຍ່ອຍ ຂອງ ພະນັກງານຈາກທະນາຄານໂລກເຫັນວ່າມີຜົນຄືບຫນ້າພໍສົມຄວນ, ແຕ່ກໍ່ຍັງຕ້ອງໄດ້ມີການປັບປຸງ ແລະ ແກ້ໄຂບາງຫນ້າວຽກ. ໃນຂະນະທີ່ວຽກງານຕ່າງໆຢູ່ພາກສະໜາມດຳເນີນໄປດ້ວຍດີ ແຕ່ກໍ່ຍັງມີບັນຫາກ່ຽວກັບເລື່ອງເວລາສຳລັບຈັດຕັ້ງປະຕິບັດທຸກໆກິດຈະກຳໃນຮອບວຽນ ຂອງ ທລຍ, ຍ້ອນວ່າ ທລຍ ຍັງໃຫມ່ ແລະ ທັງອອກແບບໄປພ້ອມໆກັນໃນເວລາປະຕິບັດໂຄງການ, ສະນັ້ນ ຈຶ່ງເຫັນ ວ່າລະບົບທັງຫມົດ ຂອງ ທລຍ ຍັງບໍ່ສາມາດຈັດຕັ້ງໄດ້ຫມົດ.

ການສັງເກດ ແລະ ຄຳຄິດຄຳເຫັນ ຈາກ ການມາຢ້ຽມຢາມຂອງທີ່ປຶກສາທະນາຄານໂລກ ໃນເດືອນມິຖຸນາ 2004 ໄດ້ລະບຸໄວ້ຢູ່ບົດລາຍງານວິຊາການ. ທີ່ປຶກສາ ຂອງ ທະນາຄານໂລກ ໄດ້ສະແດງຄວາມເປັນຫ່ວງຕໍ່ບັນຫາທີ່ກ່ຽວຂ້ອງກັບວຽກວິຊາການພາກສະໜາມຢູ່ແຂວງຫົວພັນ ຊຶ່ງໄດ້ເນັ້ນໃສ່ບັນຫາທາງ ແລະ ຂົວ.

## 2.2. ການມີສ່ວນຮ່ວມຂອງຊາວບ້ານໃນຂະບວນການ ທລຍ

### *ການຝຶກອົບຮົມການຈັດຕັ້ງປະຕິບັດ ແລະ ບູລະນະໂຄງການຍ່ອຍໃຫ້ແກ່ຊຸມຊົນ*

ການຝຶກອົບຮົມການຈັດຕັ້ງປະຕິບັດ ແລະ ບູລະນະໂຄງການຍ່ອຍໃຫ້ແກ່ທີມງານຢູ່ໃນຊຸມຊົນ ກ່ຽວກັບ ລະບົບນ້ຳລິນໄດ້ຖືກຈັດຂຶ້ນໃນ ເດືອນ ມິຖຸນາ 2004 ເປັນຊຸດທຳອິດ ຢູ່ ເມືອງສົບເບົາ ໂດຍການເຂົ້າຮ່ວມຂອງ ທ່ານ ນີວລ ນີດ (Neil Neate) ທີ່ປຶກສາວິຊາການ ຂອງ ທະນາຄານໂລກ. ທ່ານ ນີວລ ໄດ້ມີຄຳເຫັນວ່າອຸປະກອນ (ຊຶ່ງຫົວຫນ້າວິຊາການ ທລຍ ໄດ້ກະກຽມໄວ້ເພື່ອນຳສະເຫນີຕໍ່ທີ່ປຶກສາ) ແລະ ໂຄງຮ່າງຊຸດຝຶກອົບຮົມເປັນອຸປະກອນ ແລະ ຫລັກສູດທີ່ຄົບຖ້ວນ. ນອກຈາກນັ້ນ, ຈຳນວນຜູ້ເຂົ້າຮ່ວມຝຶກອົບຮົມຈາກຊຸມຊົນກໍ່ໄດ້ຮັບຄາດຫມາຍ ຊຶ່ງເປັນຍ້ອນການຮ່ວມມືລະ ຫວ່າງ ທລຍ ແລະ ຫ້ອງການສາທາເມືອງ, ໜ່ວຍງານນ້ຳສະອາດ ແລະ ສິ່ງແວດລ້ອມເມືອງ, ສະຫະພັນແມ່ນຍິງ. ການຝຶກອົບຮົມລະບົບນ້ຳລິນ ຢູ່ ເມືອງສົບເບົາຄັ້ງນີ້ ໄດ້ດຳເນີນໄປເປັນເວລາ 1 ວັນເຕັມ ແລະເຄິ່ງວັນ, ແຕ່ວ່າ ໄລຍະ ເວລາສຳລັບຝຶກອົບຮົມຫົວຂໍ້ດັ່ງກ່າວແມ່ນຂຶ້ນກັບປະເພດໂຄງການຍ່ອຍ ແລະ ຄວາມສົນໃຈ ແລະ ປະສົບການຂອງ ຕົວແທນຊຸມຊົນ.

ຕາຕະລາງ 3 ສະແດງໃຫ້ເຫັນຜົນການເຂົ້າຮ່ວມຝຶກອົບຮົມການຈັດຕັ້ງປະຕິບັດ ແລະ ບູລະນະໂຄງການຍ່ອຍ ຈາກຊຸມຊົນ (ຝຶກອົບຮົມຕົວຈິງໃຫ້ພະນັກງານ ທລຍ ຜູ້ທີ່ຈະເປັນຄູຝຶກຫົວຂໍ້ດັ່ງກ່າວໃນຊຸດຕໍ່ໄປ) ທີ່ໄດ້ຈັດຂຶ້ນນັບແຕ່ຊຸດທຳອິດຈົນຮອດທ້າຍເດືອນມິຖຸນາ. ຍ້ອນວ່າໂຄງການຍ່ອຍມີຫລາຍປະເພດ ແລະ ຢູ່ບາງໂຄງການຍ່ອຍກໍ່ໄດ້ຈັດຕັ້ງສຳເລັດໄວກ່ວາໂຄງການອື່ນ, ດັ່ງນັ້ນ ການຝຶກອົບຮົມກ່ຽວກັບຫົວຂໍ້ນີ້ ຕ້ອງໄດ້ເຮັດຈົນກ່ວາໂຄງການຍ່ອຍທັງຫມົດຈະສຳເລັດລົງ.

**ຕາຕະລາງ 3. ຈຳນວນຜູ້ເຂົ້າຮ່ວມການຝຶກອົບຮົມ ກ່ຽວກັບ ການຈັດຕັ້ງປະຕິບັດ ແລະ ບູລະນະໂຄງການຍ່ອຍ, ຮອດທ້າຍ ເດືອນມິຖຸນາ 2004**

| ເມືອງ / ເຂດ | ປະເພດຝຶກອົບຮົມ / ປະເພດໂຄງການຍ່ອຍ | ຈຳນວນ ຜູ້ເຂົ້າຮ່ວມ ທັງຫມົດ | ຍິງ | ຈຳນວນ ຜູ້ເຂົ້າ ຮ່ວມ ຈາກ ຊຸມຊົນ | ຈຳນວນ ທີ່ບໍ່ແມ່ນຊຸມຊົນ | | |
|---|---|---|---|---|---|---|---|
| | | | | | ລັດ | ທລຍ | ອື່ນໆ |
| **ເຊໂປນ** | | | | | | | |
| ເຂດແກ້ງກົກ | ທາງຊົນນະບົດ | 29 | 3 | 16 | 1 | 12 | 0 |
| ເຂດໂພນມ່ວງ | ນ້ຳບາດານ | 26 | 4 | 16 | 1 | 9 | 0 |
| **ມູນລະປະໂມກ** | | | | | | | |
| ເຂດ 4 | ໂຮງຮຽນມັດທະຍົມຕອນຕົ້ນ | 14 | 4 | 4 | 3 | 7 | 0 |
| ເຂດ 4 | ຂົວ | 29 | 4 | 21 | 1 | 7 | 0 |
| **ສົບເບົາ** | | | | | | | |
| ເຂດຫ້ວຍຕຸງ | ຂົວ | 15 | 2 | 6 | 2 | 6 | 1 |
| ເຂດເມືອງຮັງ | ລະບົບນ້ຳລິນ | 34 | 10 | 22 | 3 | 8 | 1 |

ຜູ້ເຂົ້າຮ່ວມຈາກຊຸມຊົນສະແດງຄວາມເປັນຫ່ວງ ແລະ ສົນໃຈໃນຄວາມຍືນຍົງຂອງໂຄງການຍ່ອຍຂອງເຂົາເຈົ້າ ໂດຍ ມີການປຶກສາຫາລື ແລະ ຊອກຫາວິທີການແກ້ໄຂບັນຫາໃນເວລາເຮັດຝຶກອົບຮົມ. ຊຸມຊົນ / ຊາວບ້ານ ໄດ້ສະເຫນີ ໃຫ້ມີທຶນຫມູນວຽນເພື່ອເປັນຄ່າໃຊ້ຈ່າຍບູລະນະໂຄງການຍ່ອຍ.

ໃນເວລາເຮັດຝຶກອົບຮົມ, ພະນັກງານ ທລຍ ໄດ້ແນະນຳໃຫ້ເຂດ ໂດຍສະເພາະຕົວແທນບ້ານ ໃຫ້ຈັດຕັ້ງຄະນະກຳ ມະການເພື່ອຮັບຜິດຊອບການຄຸ້ມຄອງ ແລະ ບູລະນະໂຄງການຍ່ອຍໃນຂັ້ນບ້ານ, ຕົວຢ່າງ: ບ້ານທີ່ມີໂຄງການຍ່ອຍ ຈັດຕັ້ງຢູ່, ຫລື ຮັບຜິດຊອບບູລະນະທາງ ແລະ ອື່ນໆ. ທີມງານບູລະນະເຂດ ຈະຕ້ອງສົ່ງລາຍຊື່ ແລະ ໂຄງຮ່າງຄະນະ ກຳມະການໃຫ້ ທລຍ ເມືອງ ໂດຍບໍ່ໃຫ້ກາຍທ້າຍເດືອນກໍລະກົດນີ້. ຫລັງຈາກນັ້ນ, ທລຍ ຈະສະຫລຸບລາຍຊື່ ແລະ ປະເມີນຄວາມຕ້ອງການສຳລັບຝຶກອົບຮົມຄະນະເຫລົ່ານັ້ນ, ຕົວຢ່າງ: ບັນຊີ, ພື້ນຖານການຄຸ້ມຄອງ ບໍລິຫານ ສຳລັບ ຫົວຫນ້າຄະນະ, ເລື່ອງວິຊາການທີ່ກ່ຽວຂ້ອງກັບໂຄງການຍ່ອຍ ແລະ ອື່ນໆອີກທີ່ຈຳເປັນ.

ເຂດນຶ່ງ ຈະປະກອບດ້ວຍຫລາຍໆບ້ານໃນການເຂົ້າຮ່ວມຂະບວນໂຄງການ ທລຍ, ສະມາຊິກ ຂອງ ທີມງານເຂດ ອາດຈະ ບໍ່ແມ່ນຄົນທີ່ມາຈາກບ້ານໄດ້ຮັບໂຄງການຈາກ ທລຍ ໂດຍກົງໃນຮອບວຽນຈັດຕັ້ງປະຕິບັດກິດຈະກຳ. ສະ ນັ້ນ, ທີມງານບ້ານ ຊຶ່ງຢູ່ໃນບ້ານທີ່ໄດ້ຮັບກິດຈະກຳໄດ້ຖືກກຳນົດຂຶ້ນ, ທັງທີມງານເຂດ ແລະ ທີມງານບ້ານ ຈະຕ້ອງ ເຂົ້າໃຈບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ, ເຮັດວຽກຮ່ວມກັນເປັນທີມ ແລະ ປະສານງານໃຫ້ມີປະ ສິດທິພາບ ແລະ ປະສິດທິຜົນດ້ານຄຳຄິດຄຳເຫັນ ເພື່ອຊາວບ້ານໄດ້ຮັບຂໍ້ມູນດ້ານວິຊາການ (ວຽກກໍ່ສ້າງ, ວິຊາ ການສ້ອມແປງ, ການເປັນ ຫົວຫນ້າທີມ ແລະ ອື່ນໆ).

ໃນປັດຈຸບັນ, ວິຊາການ ທລຍ ກຳລັງທົບທວນຄືນປື້ມຄູ່ມືຝຶກອົບຮົມການຈັດຕັ້ງປະຕິບັດ ແລະ ບູລະນະໂຄງການ ຍ່ອຍຂັ້ນແຂວງ ແລະ ເມືອງ ເພື່ອຈັດຝຶກອົບຮົມໃຫ້ທີມງານເຂດ ແລະ ບ້ານ ໂດຍປະສານງານກັບຕົວແທນພາກລັດ.

<u>ບົດຮຽນຖອດຖອນໄດ້</u>

ຄຳຄິດຄຳເຫັນຈາກຊຸດຝຶກອົບຮົມການຈັດຕັ້ງປະຕິບັດ ແລະ ບູລະນະຊຸດນີ້ ສັງລວມໄດ້ດັ່ງລຸ່ມນີ້:
- ທລຍ ຄວນຈັດຈ້າງບໍລິສັດ ຫລື ຜູ້ທີ່ມີປະສົບການຈາກພາຍນອກ ເປັນຄູຝຶກ.
- ວິຊາການ 2 ທ່ານ ຢູ່ ຂັ້ນສູນກາງ / 1 ທ່ານ ຈາກ ຂັ້ນແຂວງ ແລະ 1 ທ່ານ ຈາກ ຂັ້ນເມືອງ ເຫັນວ່າບໍ່ພຽງພໍສຳລັບຈັດຝຶກອົບຮົມການຈັດຕັ້ງປະຕິບັດ ແລະ ບູລະນະໂຄງການຍ່ອຍຫລາຍໆໂຄງການໄດ້ (ທີ່ປຶກສາທະນາຄານໂລກກໍ່ມີຄຳເຫັນວ່າ ຈຳນວນວິຊາການເພື່ອອອກແບບ ແລະ ຊີ້ນຳ ກໍ່ບໍ່ພຽງພໍກັບຈຳນວນຝຶກອົບຮົມໃຫ້ໂຄງການຍ່ອຍ, ສະນັ້ນ ຈຶ່ງຈຳເປັນຕ້ອງມີວິຊາການເພີ້ມເພື່ອຊ່ວຍຝຶກອົບຮົມ).
- ຕົວແທນພາກລັດຂັ້ນແຂວງ ແລະ ເມືອງ ຍັງຂາດວິຊາການພາກສະຫນາມສະເພາະ ເຊັ່ນ: ນ້ຳສະອາດ, ຊົນລະປະທານ ແລະ ວິຊາການດ້ານອື່ນໆ ທີ່ກ່ຽວຂ້ອງກັບວຽກງານ ທລຍ. ເຖິງຢ່າງໃດກໍ່ຕາມ, ທາງເມືອງກໍ່ຍັງມີວິຊາການດ້ານຄົມມະນາຄົມ ແຕ່ຄ່າຈ້າງວິຊາການນັ້ນພັດສູງກ່ວາ ທລຍ ສາມາດຈ່າຍໄດ້. ສະນັ້ນ, ຈຶ່ງຕ້ອງການຄວາມຊ່ວຍເຫລືອດ້ານວິຊາການເພື່ອແກ້ໄຂບັນຫານີ້.
- ຕ້ອງມີການກະກຽມ ແລະ ປະສານງານລະຫວ່າງ ທລຍ ແລະ ບັນດາຕົວແທນພາກລັດ ເປັນຢ່າງດີ ເພື່ອເຮັດໃຫ້ວຽກງານຝຶກອົບຮົມໄດ້ຮັບຜົນດີ.

ຂໍ້ສັງເກດທີ່ພົບເຫັນຈາກການຝຶກອົບຮົມ ຈະນຳມາພິຈາລະນາໃນເວລາກະກຽມການຝຶກອົບຮົມການຈັດຕັ້ງປະຕິບັດ ແລະ ບູລະນະໃນຄັ້ງຕໍ່ໄປ. ທລຍ ຈະຮັບພະນັກງານວິຊາການຕື່ມອີກໃນໄວໆນີ້ ໂດຍສະເພາະຂັ້ນແຂວງ. ສະເລ່ຍແລ້ວ ວິຊາການເມືອງ 1 ຄົນ ຮັບຜິດຊອບ 4 ເຂດ ຫລື 30 ບ້ານ ເຫັນວ່າມີຄວາມເຫມາະສົມ ແລະ ເປັນແນວທາງໃນການແຕ່ງຕັ້ງພະນັກງານ.

***ການປະກອບສ່ວນຈາກຊຸມຊົນ***

ທຶນສົມທົບຈາກຊຸມຊົນໄດ້ລາຍງານຢູ່ໃນບົດລາຍງານສະບັບກ່ອນ. ທຶນປະກອບສ່ວນທີ່ໄດ້ຮັບຈາກທັງຫມົດ 10ເມືອງແມ່ນສະເລ່ຍໄດ້ 16.7% ຂອງ ມູນຄ່າໂຄງການຍ່ອຍທັງຫມົດ. ຕົວເລກດັ່ງກ່າວ ແມ່ນສູງກ່ວາຕົວເລກຄາດຄະເນໄວ້ໃນເບື້ອງຕົ້ນໃນເວລາທີ່ເຮັດອອກແບບໂຄງການຍ່ອຍ. ທລຍ ບໍ່ໄດ້ບັງຄັບໃຫ້ຊຸມຊົນປະກອບທຶນສົມທົບ ທລຍ, ແຕ່ຢ່າງໃດ, ແຕ່ຜົນປະກອບສ່ວນຊ້ຳພັດສະແດງໃຫ້ເຫັນວ່າ ຊຸມຊົນມີເອົາໃຈໃສ່ວຽກງານຂອງໂຄງການ ທລຍ ແລະສະແດງຄວາມເປັນເຈົ້າຂອງຕໍ່ກັບໂຄງການຍ່ອຍ.

## 2.3. ການຂະຫຍາຍໂຄງການໄປຫາເມືອງໃຫມ່

ດັ່ງທີ່ໄດ້ລະບຸໄວ້ຢູ່ໃນຄູ່ມືຈັດຕັ້ງປະຕິບັດໂຄງການ ທລຍ ກ່ຽວກັບ ຂອບເຂດເປົ້າຫມາຍ ແລະ ການສຳເລັດໂຄງການ, ທລຍ ໄດ້ມີແຜນຂະຫຍາຍໂຄງການໄປຫາເມືອງໃຫມ່ ຢູ່ໃນ 3 ແຂວງ ສຳລັບ ປີທີ 2 ຂອງ ການຈັດຕັ້ງປະຕິບັດໂຄງການ. ພາຍຫລັງໄດ້ມີການກວດສອບຂໍ້ມູນຄວາມທຸກຍາກ ຈຶ່ງໄດ້ສະເຫນີວ່າ ການຂະຫຍາຍໂຄງການຄວນຈະເຮັດຢູ່ 3 ເມືອງໃຫມ່ໃນແຂວງຫົວພັນ ຄື: ເມືອງ ຊຳໃຕ້, ຫົວເມືອງ ແລະ ວຽງໄຊ, 1 ເມືອງໃນແຂວງສະຫວັນນະເຂດ ຄື: ເມືອງ ພີນ. ລາຍຊື່ເມືອງດັ່ງກ່າວນັ້ນ ແມ່ນນອນຢູ່ໃນ 47 ເມືອງທຸກຍາກ ຂອງ ແຜນງານລຶບລ້າງຄວາມທຸກຍາກ ຂອງ ລັດຖະບານ National Poverty Eradication Programme (NPEP) ແລະ ປັດຈຸບັນໄດ້ປ່ຽນຊື່ເປັນ National Growth and Poverty Eradication Strategy (NGPES).

ທະນາຄານໂລກ ໄດ້ຮັບຮອງເອົາເມືອງເຫລົ່ານັ້ນຕາມຫລັກການ, ແລະ ສະພາບໍລິຫານ ຂອງ ທລຍ ກໍ່ໄດ້ຮັບຮອງເອົາເຊັ່ນດຽວກັນ. ດັ່ງນັ້ນ, ຂັ້ນຕໍ່ໄປຈຶ່ງຈະເປັນການຈັດຊື້-ຈັດຈ້າງ ແລະ ຄັດເລືອກເອົາພະນັກງານປະຈຳເມືອງໃຫມ່ ແລະ

ການຈັດແບ່ງທຶນສຳລັບ 14 ເມືອງເປົ້າຫມາຍ ທລຍ ທັງຫມົດເພື່ອຈັດຕັ້ງໂຄງການຍ່ອຍ ຈະລວມເຂົ້າໃນງົບປະມານຮອບວຽນທີ່ 2. ປັດຈຸບັນ, ທລຍ ຍັງລໍຖ້າການຮັບຮອງການຂະຫຍາຍເມືອງໃຫມ່ຄັ້ງສຸດທ້າຍ ຈາກນັ້ນຈະໄດ້ກຽມລົງເມືອງໃຫມ່ໃນເດືອນ ກັນຍາ ປີ 2004 ນີ້.
ການຈັດແບ່ງງົບປະມານ ສຳລັບ ຮອບວຽນຕໍ່ໄປ ຈະໄດ້ນຳໃຊ້ຂໍ້ມູນຫລາຍໆອັນທີ່ກ່ຽວຂ້ອງກັບຄວາມທຸກຍາກ. ເມືອງທີ່ມີປະຊາຊົນທຸກຍາກຫລາຍທີ່ສຸດ ຈະໄດ້ຮັບທຶນຫລາຍກ່ວາເມືອງທີ່ມີປະຊາຊົນທຸກຍາກຫນ້ອຍກ່ວາ, ແລະ ເມືອງທີ່ ທລຍ ໄດ້ຈັດຕັ້ງປະຕິບັດຜ່ານມາທີ່ພົບວ່າມີຈຳນວນປະຊາຊົນທຸກຍາກຫນ້ອຍ ອາດຈະຕ້ອງຕັດງົບປະມານລົງ.

ການຕົກລົງສຳລັບການຂະຫຍາຍໂຄງການໄປຫາແຂວງໃຫມ່ໃນປີ 2005 ໄດ້ມີການຕົກລົງຕາມເງື່ອນໄຂດັ່ງນີ້:
(i) ຂໍ້ຕົກລົງຂອງສະພາບໍລິຫານ ແລະ ທະນາຄານໂລກ ສຳລັບ ແຂວງເປົ້າຫມາຍ, (ii) ຕ້ອງໃຫ້ມີທຶນສົມທົບຂອງລັດຖະບານ, (iii) ທລຍ ຕ້ອງໄດ້ສື່ລາຍຊື່ຜູ້ໃຫ້ທຶນທີ່ກຳລັງຈັດຕັ້ງປະຕິບັດຢູ່ເມືອງເປົ້າຫມາຍ, ແລະ (v) ສ້າງຄວາມເຂັ້ມແຂງໃຫ້ການຈັດຕັ້ງພາຍໃນ ທລຍ (ຫລຸດຜ່ອນອັດຕາພະນັກງານຢຸດເຊົາເຮັດວຽກກັບ ທລຍ)

## 3. ກິດຈະກຳອື່ນໆ

### 3.1. ການສຳຫລວດຂໍ້ມູນພື້ນຖານ

ຄຳເຫັນຈາກທີ່ປຶກສາຂອງທະນາຄານໂລກ, ທ່ານ ນາງ ເຈນນິກ້າ (Jennica Larrison) ໃນເດືອນມິຖຸນາ 2004 ໄດ້ເປີດໂອກາດໃຫ້ ທລຍ ທົບທວນເບິ່ງຄວາມຄືບຫນ້າຂອງຜົນການສຳຫລວດຂໍ້ມູນພື້ນຖານ ທີ່ໄດ້ເຮັດສຳຫລວດໂດຍສູນສະຖິຕິແຫ່ງຊາດຈຳນວນນຶ່ງ. ຄຳເຫັນໄດ້ຮັບຈາກທີ່ປຶກສາມີດັ່ງນີ້:

- (ແບບຟອມ ຂອງ ທລຍ) ຂໍ້ມູນບ້ານ (Village Profile) ແລະ ສັງຄົມຄົວເຮືອນ (Household Social Survey) ຖືວ່າເປັນແບບຟອມຄົບຖ້ວນ, ແຕ່ວາແບບຟອມເຫລົ່ານັ້ນຍັງຂາດ ຟອມຂໍ້ມູນບ້ານ 2-3 ຟອມ
- ຄຸນນະພາບຂໍ້ມູນຈາກແບບຟອມຂໍ້ມູນບ້ານ ແລະ ສັງຄົມຄົວເຮືອນ ຖືວ່າເກັບກຳໄດ້ພຽງພໍ, ແຕ່ວ່າກໍ່ຍັງມີຂໍ້ມູນທີ່ຖືກປ້ອນຜິດພາດ ແລະ ການປ້ອນຂໍ້ມູນໂຕອື່ນໆເຂົ້າເຄື່ອງຄອມພິວເຕີ້ ຄາດວ່າຈະມີໂຕຜິດພາດເຊັ່ນດຽວກັນ.
- ຄຸນນະພາບຂໍ້ມູນຈາກແບບຟອມສູນສະຖິຕິແຫ່ງຊາດ ເຫັນວ່າມີຄຸນນະພາບດີກ່ວາສອງຟອມທີ່ໄດ້ກ່າວມານັ້ນ, ແຕ່ວ່າການນຳສະເຫນີຍັງເຮັດບໍ່ເປັນທາງການ ແລະ ສຳເລັດວຽກຊ້າກ່ວາເວລາກຳນົດໄວ້ໃນສັນຍາ.

ຄວາມຈິງແລ້ວ, ສັນຍາລະຫວ່າງ ສູນສະຖິຕິແຫ່ງຊາດ ແລະ ທລຍ ຫມົດກຳນົດລົງໃນວັນທີ່ 31 ພຶດສະພາ 2004. ຍ້ອນວ່າ ສູນສະຖິຕິແຫ່ງຊາດ ບໍ່ສາມາດສຳເລັດວຽກໄດ້ ຈຶ່ງໄດ້ຕໍ່ສັນຍາອອກ ຮອດວັນທີ່ 17 ເດືອນກັນຍາ (ອີງຕາມເງື່ອນໄຂທີ່ໄດ້ລະບຸ) ເພື່ອຮັບປະກັນວຽກທີ່ເຮັດຄ້າງໃຫ້ໃຫ້ມີຄວາມສົມບູນ.

ຍ້ອນວ່າພະນັກງານວິຊາການ ສູນສະຖິຕິແຫ່ງຊາດມີວຽກອື່ນຄ້າງ, ພະນັກງານ ທລຍ ຈຶ່ງໄດ້ຕິດຕາມຄວາມຄືບຫນ້າຂອງຂໍ້ມູນຈາກສູນສະຖິຕິແຫ່ງຊາດຢ່າງໃກ້ຊິດ ເພື່ອຕິດຕາມເອົາຕາຕະລາງຂໍ້ມູນ ແລະ ແຈ້ງໃຫ້ທາງສູນສະຖິຕິຮັບຊາບກ່ຽວກັບການຕໍ່ສັນຍາ.

ທ່ານ ນາງ ເຈນນິກ້າ ຈະກັບຄືນມາຕິດຕາມການວິໃຈການສຳຫລວດຂໍ້ມູນພື້ນຖານ ແລະ ການຂຽນບົດລາຍງານຂອງສູນສະຖິຕິແຫ່ງຊາດ. ນອກຈາກວຽກງານສຳຫລວດຂໍ້ມູນພື້ນຖານ, ທ່ານ ນາງ ເຈນິກ້າ ຍັງໄດ້ໃຫ້ຄຳເຫັນກ່ຽວກັບລະບົບຄຸ້ມຄອງ ທລຍ ທັງຫມົດ, ແລະ ການຕິດ ຕາມ ແລະ ກວດກາໂຄງການຍ່ອຍ.

## 3.2. ການສຶກສາສັງຄົມ

ທີ່ປຶກສາຈາກພາຍນອກ ໄດ້ເລີ້ມວຽກເກັບກຳຂໍ້ມູນກ່ຽວກັບການສຶກສາສັງຄົມໃຫ້ ທລຍ ໃນເດືອນກຸມພາ 2004, ຫລັງຈາກນັ້ນ ທລຍ ກໍ່ໄດ້ຮັບຮ່າງບົດລາຍງານ ໃນວັນທີ 17 ເດືອນພຶດສະພາ 2004. ໃນຮ່າງບົດລາຍໄດ້ສະແດງໃຫ້ເຫັນວ່າການສຶກສາດັ່ງກ່າວນັ້ນ ຍັງບໍ່ມີການວິໃຈຢ່າງເລິກເຊິ່ງ ແລະ ບໍ່ໄດ້ຕາມຄວາມ ຕ້ອງການ ຂອງ ທລຍ ທີ່ກຳນົດໄວ້ໃນລາຍລະອຽດໜ້າວຽກສຳລັບທີ່ປຶກສາ. ຮ່າງບົດລາຍງານ ໄດ້ສົ່ງໄປໃຫ້ທະນາ ຄືນເພື່ອຂໍຄຳເຫັນ ແລະ ໄດ້ຮັບຄຳຕອບວ່າຄຸນນະພາບຂອງວຽກຢູ່ໃນຮ່າງບົດລາຍງານແມ່ນບໍ່ເປັນໄປຕາມຄາດໝາຍ.ສະນັ້ນ, ທລຍ ຈຶ່ງແຈ້ງໄປຍັງທະນາຄານໂລກວ່າ ທລຍ ຕ້ອງການໂຈະສັນຍາກັບທີ່ປຶກສາ.

ເນື່ອງຈາກວ່າ ການສຶກສາສັງຄົມແມ່ນເງື່ອນໄຂຂອງສັນຍາກູ້ຢືມ ລະຫວ່າງ ລັດຖະບານລາວ ກັບ ທະນາຄານໂລກ, ທລຍ ຍັງຕ້ອງໄດ້ຂໍຄຳເຫັນຈາກທາງທະນາຄານໂລກເພື່ອດຳເນີນການຂັ້ນຕໍ່ໄປ, ແລະ ທະນາຄານໂລກໄດ້ແນະນຳວ່າ ທລຍ ຄວນຈະນຳໃຊ້ຈັດກອງປະຊຸມປຶກສາຫາລືໂດຍນຳໃຊ້ຮ່າງບົດລາຍງານ ເພື່ອຂໍຄຳແນະນຳ ແລະ ຄຳຄິດຄຳເຫັນ ຈາກພາກສ່ວນຕ່າງໆທີ່ກ່ຽວຂ້ອງ ເພື່ອສ້າງເປັນແຜນຈັດຕັ້ງປະຕິບັດສົ່ງໃຫ້ທະນາຄານໂລກ ແລະ ສະພາຍບໍລິຫານ ທລຍ ພິຈາລະນາ.

ກອງປະຊຸມປຶກສາຫາລື ຄາດວ່າຈະຖືກຈັດຂຶ້ນໃນວັນທີ 14 ເດືອນພຶດສະພາ 2004. ຜົນຈາກກອງປະຊຸມ ຈະນຳສະເໜີເປັນເອກະສານສະເພາະ. ບົດສະຫລຸບຂອງການສຶກສາສັງຄົມ ແລະ ຂັ້ນຕອນຕ່າງໆ ຈະຖືກນຳສະເໜີໃນໄຕມາດຕໍ່ໄປ.

## 3.3. ການປ້ອງກັນ ແລະ ແກ້ໄຂຂໍ້ຂັດແຍ່ງ

ດັ່ງທີ່ໄດ້ລາຍງານຢູ່ໃນໄຕມາດຜ່ານມາ, ກອງປະຊຸມປຶກສາຫາລືຄັ້ງທຳອິດເພື່ອແນະນຳຂັ້ນຕອນການປ້ອງການ ແລະ ແກ້ໄຂຂໍ້ຂັດແຍ່ງຢູ່ ໃນລະດັບເມືອງ ແລະ ເຂດ ໄດ້ຈັດຂຶ້ນໃນເດືອນກຸມພາ ແລະ ມີນາ 2004 ຢູ່ ເມືອງສິບເບົາ, ເຊໂປນ ແລະ ມູນລະປະໂມກ. ກອງປະຊຸມແບບດຽວກັນນີ້ ໄດ້ຈັດຂຶ້ນອີກໃຫ້ແກ່ເມືອງ ແລະ ເຂດທີ່ຍັງເຫລືອ ໃນເດືອນພຶດສະພາ ແລະ ມີຖຸນາ 2004 ຄື: ເມືອງແອດ, ຊຽງຄໍ້, ວິລະບູລີ, ນອງ, ໂຂງ, ປະທຸມພອນ ແລະ ສຸຂຸມາ. ກອງປະຊຸມປຶກສາຫາລືຢູ່ແຕ່ລະບ່ອນ ໄດ້ຖືກຈັດຂຶ້ນເປັນເວລາ 2 ວັນ ແລະ ດຳເນີນກອງປະຊຸມໂດຍພະນັກງານ ທລຍ ຂັ້ນສູນກາງ ແລະ ເມືອງ.

ການແນະນຳກ່ຽວກັບຂັ້ນຕອນແກ້ໄຂຂໍ້ຂັດແຍ່ງ ໄດ້ຖືກນຳສະເໜີໃຫ້ຂັ້ນບ້ານເປັນສ່ວນໃຫຍ່. ການແນະນຳຂັ້ນຕອນໄດ້ດຳເນີນໄປໃນ 17 ບ້ານ ຂອງ ຈຳນວນ 550 ບ້ານເປົ້າໝາຍ ທລຍ. ການຝຶກອົບຮົມ ແມ່ນຝຶກໃຫ້ຫົວໜ້າເຂດນັ້ນກໍ່ຍ້ອນວ່າ ທລຍ ກວມເອົາຫລາຍບ້ານ ສະນັ້ນຈຶ່ງຝຶກໃຫ້ແຕ່ບ້ານທີ່ໄດ້ຮັບຜົນປະໂຫຍດຈາກ ທລຍ ໃນຮອບວຽນທຳອິດ. ຫົວໜ້າເຂດຜູ້ໄດ້ຮັບການຝຶກອົບຮົມແລ້ວນັ້ນ ຈະຊ່ວຍ ທລຍ ຝຶກໃຫ້ກັບຊາວບ້ານ ຊຶ່ງຈະເປັນການປະຢັດເວລາ ແລະ ງົບປະມານ. ການຝຶກອົບຮົມຢູ່ລະດັບບ້ານ ແມ່ນຈະເຮັດແບບງ່າຍດາຍ ແລະ ເນັ້ນໃສ່ແນະນຳຂັ້ນຕອນແກ້ໄຂຂໍ້ຂັດແຍ່ງໂດຍລວມ ຂອງ ທລຍ, ຂັ້ນຕອນພື້ນຖານກ່ຽວກັບການແກ້ໄຂຂໍ້ຂັດແຍ່ງໄດ້ຮັບຈາກຄຳຄິດຄຳເຫັນ, ວິທີຕື່ມແບບຟອມຂໍ້ຂັດແຍ່ງ/ຄຳຄິດຄຳເຫັນ ແລະ ຈະສົ່ງແບບຟອມໄປໃສ / ໃຫ້ໃຜ.

ຜ່ານມາ ທລຍ ຂັ້ນສູນກາງໄດ້ໃຫ້ຄຳແນະນຳກ່ຽວກັບຂໍ້ຂັດແຍ່ງ ໃນເດືອນພຶດສະພາ 2004 ຄື ຢູ່ເຂດສິບເບົາ (ເມືອງສິບເບົາ ແຂວງຫົວພັນ). ຊຸມຊົນໃນເຂດນັ້ນໄດ້ກ່າວວ່າການກໍ່ສ້າງຊົນລະປະທານບໍ່ໄດ້ຮັບມາດຕະຖານ. ທີມງານ

ທລຍ ແຂວງ ໄດ້ຕິດຕໍ່ຫາຫ້ອງການຂັ້ນສູນກາງເພື່ອຂໍຄຳເຫັນທີ່ຈະແກ້ໄຂບັນຫາເກີດຂຶ້ນນັ້ນ. ບັນຫາດັ່ງກ່າວ ຖືກແນະນຳວ່າຄວນຈະໄປຂໍຄວາມຊ່ວຍເຫລືອຈາກຫ້ອງການກະສິກຳເມືອງ (ພະແນກຊົນລະປະທານ), ແລະ ພະນັກງານ ທລຍ ເມືອງ ໄດ້ຮັບການຮ່ວມມືຈາກພາກລັດຊ່ວຍຕິດຕາມກິດຈະກຳນັ້ນໃຫ້. ການກໍ່ສ້າງຊົນລະປະທານແມ່ນໂຄງການຍ່ອຍທີ່ຊາວບ້ານເປັນຜູ້ຈັດຕັ້ງປະຕິບັດເອງ [2] . ສະນັ້ນ, ເພື່ອປ້ອງກັນບໍ່ໃຫ້ບັນຫາແບບນີ້ເກີດຂຶ້ນອີກໃນອະນາຄົດ (ໂຄງການຍ່ອຍ ປະເພດກໍ່ສ້າງທັງຫມົດ) ຕ້ອງໄດ້ເອົາໃຈໃສ່ຕື່ມດັ່ງນີ້: ເນັ້ນຫນັກການອອກແບບ ແລະ ຫນ້າວຽກລະອຽດ ຊຶ່ງເຮັດຂຶ້ນໃນຊ່ວງປະເມີນໂຄງການຍ່ອຍ (ກ່ອນຈັດຕັ້ງປະຕິບັດ); ຮັບປະກັນການປຶກສາຫາລື ກັບຊຸມເປັນໄປປົກກະຕິ ແລະ ມີການປຶກສາຫາລືກັນໃນທຸກໆຂັ້ນຕອນ; ຮັບປະກັນການຕິດຕາມໂຄງການຍ່ອຍ ໃນເວລາກຳລັງຈັດຕັ້ງປະຕິບັດບັດຈາກພະນັກງານວິຊາການ ທລຍ.

## 3.4. ຄະນະຈາກທະນາຄານໂລກ

ຢູ່ໃນໄຕມາດນີ້, ຄະນະຈາກທະນາຄານໂລກໄດ້ມາຕິດຕາມໂຄງການ ທລຍ ເຖິງ ສອງ ຄະນະ ຄື:

i. ໃນທ້າຍເດືອນເມສາ ຮອດ ຕົ້ນເດືອນພຶດສະພາ, ທ່ານ ສະຕີບ ເບີຈີດຊ (Steve Burgess) ໄດ້ມາຕິດຕາມການຈັດຕັ້ງປະຕິບັດໂຄງການຍ່ອຍ ຂອງ ທລຍ ຢູ່ ແຂວງສະຫວັນນະເຂດ ເພື່ອຕິດຕາມເບິ່ງບັນຫາທີ່ໄດ້ຍົກຂຶ້ນໃນການມາຕິດຕາມໂຄງການຍ່ອຍໃນຄັ້ງຜ່ານມາ. ໃນບົດລາຍງານຂອງ ທ່ານ ສະຕີບ ໄດ້ຍົກບັນຫາທີ່ສຳຄັນຂຶ້ນ ໂດຍສະເພາະການປັບປຸງໂຄງຮ່າງລະບົບຄຸ້ມຄອງຂໍ້ມູນ ແລະ ວິທີກ່ຽວກັບການຈັດການຂໍ້ມູນ.

ii. ນັບແຕ່ວັນທີ 14 - 20 ເດືອນມິຖຸນາ, ທ່ານ ນາງ ເມຣຽມ ຊາລິ້ມ (Maryam Salim) ຜູ້ຮັບຜິດຊອບໂຄງການ ທລຍ) ໄດ້ນຳພາຄະນະ ຊຶ່ງປະກອບດ້ວຍ ທ່ານ ນາງ ອ້ອຍທິບ ມົງຄົນສະຫວັດ (ຈັດຊື້-ຈັດຈ້າງ); ທ່ານ ນາງ ນິພາ ສິຣິບຸດທະມາດ (ຄຸ້ມຄອງການເງິນ); ທ່ານ ນາງ ສິຣິລັດ ສິຣິຈະລັດວົງ (ການຈັດຊື້-ຈັດຈ້າງ / ເບີກ ຈ່າຍໂຄງການຍ່ອຍ); ທ່ານ ນາງ ເຈນນີກ້າ (ສຳຫລວດຂໍ້ມູນພື້ນຖານ; ກວດກາ ແລະ ປະເມີນຜົນ); ແລະ ທ່ານ ນີວລ ນີດ (Neil Neate) ວິຊາການ. ຄະນະດັ່ງກ່າວ ໄດ້ທົບທວນລະດັບຄວາມຄືບຫນ້າໂຄງການ ແລະ ຄວາມຄືບຫນ້າການຈັດຕັ້ງປະຕິບັດທັງຫມົດ ຕັ້ງແຕ່ການມາຢ້ຽມຢາມໂຄງການຄັ້ງວັນທີ 19 - 28 ມັງກອນ 2004.

    ນອກຈາກຄະນະໄດ້ໃຊ້ເວລາເຮັດວຽກກັບພະນັກງານ ທລຍ ຢູ່ ຂັ້ນສູນກາງ ໃນເດືອນມິຖຸນາ, ສະມາຊິກຄະນະບາງທ່ານ ກໍ່ໄດ້ລົງຢ້ຽມຢາມໂຄງການຢູ່ແຂວງຫົວພັນ ແລະ ຈຳປາສັກ ພ້ອມດ້ວຍພະນັກງານ ທລຍ ຂັ້ນແຂວງອີກຈຳນວນນຶ່ງ. ຄຳເຫັນຕ່າງໆຂອງທາງຄະນະ ໄດ້ເຮັດເປັນບົດບັນທຶກຊ່ວຍຈຳໄວ້.

ຄະນະ ຂອງ ທ່ານ ມາຣຽມ ວາງແຜນຈະມາຢ້ຽມຢາມໂຄງການອີກໃນເດືອນຕຸລາ 2004.

## 3.5. ວຽກງານຈັດຕັ້ງ - ພະນັກງານ

ຫລັງຈາກທີ່ປະສານງານແຂວງ ທລຍ ຢູ່ ແຂວງຫົວພັນ ໄດ້ຢຸດເຊົາວຽກກັບ ທລຍ ຈຶ່ງໄດ້ມີການປະກາດຮັບເອົາ 2 ຕຳແຫນ່ງ ຄື: ຜູ້ປະສານງານແຂວງ ແລະ ຊ່ຽວຊານພັດທະນາຊຸມຊົນຂັ້ນແຂວງ, ຍ້ອນວ່າຜູ້ປະສານງານແຂວງຄົນ

[2] ຊຸມຊົນເປັນຜູ້ຈັດຕັ້ງປະຕິບັດໂຄງການຍ່ອຍດ້ວຍຕົນເອງ ໂດຍນຳໃຊ້ຊັບພະຍາກອນທີ່ຕົນມີຢູ່ (ແຮງງານດິບ, ອຸປະກອນ, ເຄື່ອງມື)

ເກົ່າຮັບຜິດຊອບທັງ 2 ຕຳແໜ່ງ. ຈາກນັ້ນ ກໍ່ໄດ້ຮັບເອົາຜູ້ປະສານງານແຂວງຄົນໃຫມ່ ໃນວັນທີ 1 ເດືອນ ມີຖຸນາ 2004, ແລະ ຊ່ງວຊານພັດທະນາຊຸມຊົນແຂວງຄົນໃຫມ່ ໃນເດືອນພຶດສະພາ 2004.

## 3.6. ບົດຮຽນຖອດຖອນໄດ້ໃນຮອບວຽນທີ່ 1 (2003 - 2004)

ເຖິງວ່າ ທລຍ ບັນລຸຜົນສຳເລັດໃນເບື້ອງຕົ້ນ ແລະ ມີຜົນງານໂດຍລວມທີ່ເປັນຫນ້າພໍໃຈ, ແຕ່ ທລຍ ກໍ່ພົບບັນຫາ ແລະ ຂໍ້ຫຍຸ້ງຍາກຫລາຍປະການ ເນື່ອງຈາກວ່າ ທລຍ ຍັງເປັນໂຄງການໃຫມ່ ແລະ ພະຍາຍາມເຮັດວຽກພັດທະນາໃຫ້ຫລາຍໆບ້ານໃນເວລາທີ່ສັ້ນ. ບັນຫາອື່ນໆທີ່ເກີດຂຶ້ນ ກໍ່ຍ້ອນວ່າການເສີມສ້າງຄວາມສາມາດໃນທຸກຂັ້ນ ຕ້ອງໄດ້ປະຕິບັດ.

ທລຍ ເຂົ້າໃຈວ່າໃນເວລາໂຄງການເລີ້ມຈັດຕັ້ງປະຕິບັດ ມີຄວາມກົດດັນ ແລະ ຂໍ້ຫຍຸ້ງຍາກ, ແຕ່ເຖິງຢ່າງໃດກໍ່ດີ, ທີມງານຄຸ້ມຄອງ ບໍລິຫານ ທລຍ ກໍ່ຮັບຮູ້ບາງຂອດບັນຫາ ຂອງ ທລຍ ຕ້ອງໄດ້ມີການປັບປຸງ ແລະ ແກ້ໄຂ ເພື່ອຮັບປະກັນຜົນສຳເລັດ ແລະ ຄວາມຍືນຍົງຂອງໂຄງການ. ເພື່ອແກ້ໄຂບາງຈຸດບົກພ່ອງດັ່ງກ່າວນັ້ນ ແລະ ກະກຽມໃສ່ຮອບວຽນໃຫມ່ນີ້ ທລຍ ຈຶ່ງຈະຈັດກອງປະຊຸມປຶກສາຫາລື ກ່ຽວກັບ ການທົບທວນ ແລະ ສ້າງຄວາມສາມາດໃຫ້ແກ່ພະນັກງານ ທລຍ ຂຶ້ນ ລະຫວ່າງວັນທີ 19 - 23 ກໍລະກົດ 2004. ທລຍ ມີເປົ້າຫມາຍຈະຈັດກອງປະຊຸມປະເພດນີ້ຂຶ້ນທຸກໆປີ ເພື່ອຊ່ວຍປັບປຸງ ຫລື ສະເຫນີສິ່ງທີ່ມີການປ່ຽນແປງໃຫ້ທຸກຄົນທີ່ກ່ຽວຂ້ອງຮັບຊາບ.

## 3.7. ການສ້າງວິໃສທັດ ແລະ ພາລະກິດ ຂອງ ທລຍ

ວິໃສທັດ ແລະ ພາລະກິດ ຂອງ ທລຍ ໄດ້ຖືກຮ່າງຂຶ້ນເພື່ອສະແດງໃຫ້ເຫັນແນວຄວາມຄິດຕົ້ນຕໍ ແລະ ຄວາມຮັບຜິດຊອບ ຂອງ ທລຍ ຊຶ່ງໄດ້ອະທິບາຍໂດຍຫຍໍ້ກ່ຽວກັບຜົນໄດ້ຮັບທີ່ຄາດໄວ້ສຳລັບຊາວບ້ານຜູ້ໄດ້ຮັບຜົນປະໂຫຍດ. ຄຳສະເຫນີກ່ຽວກັບ ວິໃສທັດ ແລະ ພາລະກິດ ຂອງ ທລຍ ສະແດງຢູ່ໃນເອກະສານຄັດຕິດ 3. ທລຍ ໄດ້ນຳສະເຫນີວິໃສທັດ ແລະ ພາລະກິດ ຂອງ ທລຍ ຕໍ່ຜູ້ຮັບຜິດຊອບໂຄງການ ທລຍ ຈາກທະນາຄານໂລກແລ້ວ ແລະ ພະນັກງານ ທລຍ ຂັ້ນສູນກາງເຊັ່ນດຽວກັນ. ຈາກນັ້ນ, ຈະນຳສະເຫນີຕໍ່ພະນັກງານ ທລຍ ທັງຫມົດ ຢູ່ ກອງປະຊຸມປຶກສາຫາລືກ່ຽວກັບ ການທົບທວນ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ ທລຍ. ຫວັງວ່າ ວິໃສທັດ ແລະ ພາລະກິດ ຂອງ ທລຍ ແລະ ຈຸດປະສົງ ແລະ ຫລັກການ ຂອງ ທລຍ ຈະກາຍເປັນຂໍກຸນແຈ ແລະ ການແນະນຳວຽກງານທັງຫມົດ ຂອງ ທລຍ ແລະ ເປັນແນວທາງສຳລັບພະນັກງານ ທລຍ.

# 4. ວຽກງານການເງິນ

ການປະເມີນການຄຸ້ມຄອງການເງິນໃນທຸກລະດັບ ຈາກ ພະນັກງານຂອງທະນາຄານໂລກ ເປັນການກະຕຸກຊຸກຍູ້ວຽກງານໃຫ້ດີຂຶ້ນ ແລະ ພະນັກງານຮັບຜິດຊອບການເງິນ ລາຍຈ່າຍ ຕ້ອງສືບຕໍ່ປັບປຸງບາງຂອດທີ່ຈຳເປັນ.

ຍ້ອນວ່າລະບົບ ACCPAC ທີ່ຕິດຕັ້ງ ແລະ ນຳໃຊ້ດຳເນີນວຽກງານບັນຊີ ຍັງມີຂໍ້ຜິດພາດໃນການເຮັດລາຍງານບັນຊີ, ຈຶ່ງເຮັດໃຫ້ມີຄວາມຫຍຸ້ງຍາກໃນການເຮັດລາຍງານບັນຊີໃຫ້ມີຄວາມຕໍ່ເນື່ອງກັນ. ຫວ່າງມໍ່ໆມານີ້, ໄດ້ມີການດັດແປງລະບົບບັນຊີ ແລະ ເຮັດຝຶກໃຫ້ພະນັກງານບັນຊີ, ຈຶ່ງເຮັດໃຫ້ພະນັກງານບັນຊີ ທລຍ ສາມາດນຳໃຊ້ລະບົບ ACCPAC ໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ. ດັ່ງນັ້ນ, ລະບົບລາຍງານການເງິນທັງຫມົດ ຈຶ່ງເຮັດໄດ້ດີກ່ວາໄລຍະຜ່ານມາ ແຕ່ວ່າລະບົບ ACCPAC ຍັງຕ້ອງໄດ້ຮັບການປັບປຸງເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການລະບົບການລາຍງານການເງິນ ຂອງ ໂຄງການ ທລຍ. ລະບົບ ACCPAC ຍັງບໍ່ສາມາດກວດກາ ແລະ ເຮັດລາຍງານງົບປະມານໃຊ້ຈ່າຍໃນລະດັບເມືອງໄດ້. ສະນັ້ນ, ຈຶ່ງຕ້ອງໃຫ້ທີ່ປຶກສາຄຸ້ມຄອງການເງິນຊ່ວຍດັດແປງລະບົບ ACCPAC.

ລະບົບການເຮັດລາຍງານການໃຊ້ຈ່າຍຂອງໂຄງການຍ່ອຍ ແມ່ນມີການປັບປຸງ. ການເປີດບັນຊີກັບທະນາຄານຢູ່ແຕ່ລະແຂວງເປົ້າຫມາຍ ສຳລັບ ໂຄງການຍ່ອຍ ແລະ ເງິນລ່ວງຫນ້າໃຊ້ຈ່າຍ 2 ເດືອນໃຫ້ໂຄງການຍ່ອຍ (ດັ່ງທີ່ລະບຸໄວ້ຢູ່ໃນຄູ່ມື ຈັດຕັ້ງປະຕິບັດ) ເພື່ອຈະຊ່ວຍໃຫ້ການໄຫລວຽນຂອງເງິນຢູ່ໃນບ້ວງ ຂອງ ທລຍ ມີຄວາມສອດຄ່ອງຫລາຍຂັ້ນຕອນ. ການປັບປຸງເທື່ອລະກ້າວກ່ຽວກັບການເບີກຈ່າຍໂຄງການຍ່ອຍ ໄດ້ຊ່ວຍໃຫ້ຊຸມຊົນສາມາດເບີກຖອນຄຸ້ມຄອງການເງິນໄດ້, ແຕ່ວ່າ ພະນັກງານພາກສະຫນາມ ຂອງ ທລຍ ຄວນຈະແຈ້ງໃຫ້ເຂດທີ່ຢູ່ຫ່າງໄກຮັບຮູ້ ເມື່ອມີເງິນເຂົ້າບັນຊີໂຄງການ ຍ່ອຍຂອງເຂົາເຈົ້າແລ້ວ.

## 4.1. ລາຍຈ່າຍ ຂອງ ໂຄງການ

ນັບແຕ່ 01/04/2004 to 30/06/2004

- ລາຍຈ່າຍທັງຫມົດຈາກທຶນກູ້ຢືມ IDA : $ 493,874.92
- ລາຍຈ່າຍທັງຫມົດຈາກທຶນສົມຂອງລັດຖະບານ: $ 14,480.97 ຫລື 151,712,142 Kip

  ລາຍຈ່າຍທັງຫມົດຈາກທຶນສົມຂອງລັດຖະບານ ຊຶ່ງເປັນລາຍຈ່າຍໄດ້ຈາກອາກອນເງິນເດືອນພະນັກງານ

ລາຍງານການເງິນໃນໄຕມາດນີ້ ປະກອບມີປະເພດລາຍຈ່າຍໂຄງການຍ່ອຍ. ລາຍລະອຽດກ່ຽວກັບລາຍຈ່າຍ ຂອງ ທລຍ ສະແດງຢູ່ໃນຕາຕະລາງ 4 ແລະ 5.

ຕາຕະລາງ 4. ລາຍຈ່າຍ ແລະ ແຫລ່ງລາຍຮັບ

| ແຫລ່ງລາຍຮັບ/ ຫົວຫນ່ວຍເງິນ | **01/04/2004 - 30/06/2004** | | | | | ເງິນສົດທັງຫມົດໂອນເຂົ້າ ໂຄງການ - ນັບແຕ່ **30/06/2004** |
|---|---|---|---|---|---|---|
| | ເປີດບັນຊີ | ໂອນເຂົ້າບັນຊີ ທລຍ | ລາຍຈ່າຍ | ຮັບລ່ວງຫນ້າ | ປິດບັນຊີ | |
| ທຶນສົມທົບ Kip | 35,810,933 | 114,929,069 [3] | 151,712,142 | 169,125 | 112,053,173 | **331,883,498 Kip** |
| ທຶນກູ້ຢືມ $US | 637,796.40 | 257,598.90 [4] | 493,874.92 | 8,234.42 | 358,054.96 | **1,326,505.11 $US** |

ຕາຕະລາງ 5. ປະເພດລາຍຈ່າຍ

*ຕາຕະລາງ 5. ກ. ລາຍຈ່າຍ ນັບແຕ່* **01/04/2004 - 30/06/2004**

| ປະເພດ ລາຍຈ່າຍ | 1 | 2 | 3 | 4 | 5 | 7 [5] | ລວມທັງຫມົດ |
|---|---|---|---|---|---|---|---|
| | ໂຄງການຍ່ອຍ | ທີ່ປຶກສາ ແລະ ເງິນເດືອນ | ເຄື່ອງໃຊ້ຫ້ອງການ ແລະ ອຸປະກອນ | ວຽກກໍ່ສ້າງ | ຄ່າບໍລິຫານ | ຝຶກອົບຮົມ | |
| ທຶນສົມທົບ Kip | 0 | 133,185,585 | 1,750,000 | 0 | 16,776,557 | 0 | **Kip 151,712,142** |
| ທຶນສົມທົບ $US = | 0 | 12,684.24 | 166.97 | 0 | 1,629.76 | 0 | **$US 14,480.97** |
| ທຶນກູ້ຢືມ $US | 354,279.92 | 96,723.32 | 5,324.61 | 3,636.96 | 31,598.99 | 2,311.12 | **$US 491,563.80** |
| ລວມ $US | 354,279.92 | 109,407.56 | 5,491.58 | 3,636.96 | 33,228.75 | 2,311.12 | **$US 508,355.89** |

[3] ໃນຈຳນວນນີ້ ແມ່ນໄດ້ມາຈາກ i) 100,000,000 Kip ທຶນສົມທົບຂອງລັດຖະບານ ຂອງປີງົບປະມານ; ii) 13,574,556 Kip ອາກອນເງິນເດືອນຂອງພະນັກງານ; ແລະ iii) 1,354,513 Kip ຂາຍເສື້ອຢືດ

[4] ໄດ້ຈາກການຄ່ຽນເງິນກູ້ຢືມ IDA ເອກະສານເລກທີ່ 00004 ມີຈຳນວນ 257,546.63 USD. ຈຳນວນແຕກຕ່າງ $52.27 ແມ່ນໂອນເຂົ້າບັນຊີ ຂອງ IDA ເປັນຄ່າຈ່າຍແທນຄືນຂອງລັດຖະບານ ຍ້ອນວ່າໃນເວລານັ້ນຍັງບໍ່ມີທຶນສົມທົບ.

[5] ປະເພດລາຍຈ່າຍ 6 ແມ່ນລາຍຈ່າຍການກະກຽມໂຄງການ Project Preparation Facility (PPF). ລາຍຈ່າຍ PPF ແມ່ນນອນຢູ່ໃນລາຍຈ່າຍປະເພດອື່ນໆ ໂດຍອີງຕາມປະເພດລາຍຈ່າຍ

*ຕາຕະລາງ 5. ຂ. ລາຍຈ່າຍນັບແຕ່ເລີ້ມຕົ້ນ ຮອດ* **30/06/2004**

| ປະເພດ ລາຍຈ່າຍ | 1 | 2 | 3 | 4 | 5 | 7 [6] | TOTAL Project Expenditure to date |
|---|---|---|---|---|---|---|---|
| | ໂຄງການຍ່ອຍ | ທີ່ປຶກສາ ແລະ ເງິນເດືອນ | ເຄື່ອງໃຊ້ຫ້ອງການ / ອຸປະກອນ | ວຽກກໍ່ສ້າງ | ຄ່າບໍລິຫານ | ຝຶກອົບຮົມ | |
| ທຶນສົມທົບ Kip | 0 | 870,948,884 | 19,775,175 | 66,135,276 | 231,352,741 | 0 | [7] **KIP 1,188,212,076** |
| ທຶນສົມທົບ $US = | 0 | 83,613.05 | 1,887.50 | 6,282.08 | 21,616.89 | 0 | **= $US 113,399.52** |
| ທຶນກູ້ຢືມ $US | 456,458.82 | 655,849.35 | 228,292.76 | 55,964.40 | 262,665.74 | 2,311.12 | **$US 1,661,542.19** |
| ລວມ $US | **456,458.82** | **739,462.40** | **230,180.26** | **62,246.48** | **284,282.63** | **2,311.12** | **$US 1,774,941.71** |

## 4.2. ທຶນສົມທົບຂອງລັດຖະບານ

ການຄ່ຽນເງິນຄັ້ງທຳອິດ ຈາກ ລັດຖະບານ ສຳລັບ ປີງົບປະມານລັດ ແມ່ນໄດ້ຮັບແລ້ວ (ໄດ້ຮັບ 2 ຄັ້ງ ໃນເດືອນ ພຶດສະພາ, ແຕ່ລະຄັ້ງ ແມ່ນ 50 ລ້ານກີບ)

ທລຍ ບໍ່ມີງົບປະມານພຽງພໍໃນບ້ວງຂອງທຶນສົມທົບສຳລັບຄ່າບໍລິຫານໃນໄຕມາດແລ້ວ. ໃນທ້າຍເດືອນມິຖຸນາ ເງິນເດືອນຂອງພະນັກງານຈຳນວນ 2% ໄດ້ຈ່າຍໂດຍກົງໃຫ້ທຶນສົມທົບຂອງລັດຖະບານ. ງົບປະມານເງິນກີບໃນບັນຊີ ຂອງ ທລຍ ຕ້ອງໄດ້ຖືກຄຸ້ມຄອງ ແລະ ໃຊ້ຈ່າຍຢ່າງລະມັດລະວັງ ແລະ ໂຈະການຈັດຊື້-ຈັດຈ້າງພາຍນອກ, ການບໍລິການ ແລະ ອື່ນ ເພື່ອເປັນງົບຮອງໄວ້ໃນກໍລະນີທີ່ທຶນສົມທົບຫາກໃຊ້ເວລາຄ່ຽນດົນ.

## 4.3. ການຈັດຊື້-ຈັດຈ້າງ

ໃນໄຕມາດນີ້ ຍັງມີການດຳເນີນສັນຍາ ລະຫວ່າງ ທີ່ປຶກສາ ແລະ ທລຍ ເຊັ່ນ: ການສຳຫລວດຂໍ້ມູນພື້ນຖານ, ແລະ ຜູ້ຮັບເຫມົາກໍ່ສ້າງຫ້ອງການ (ຍັງຢູ່ໃນຊ່ວງຮັບປະກັນ) ແລະ ອື່ນໆ. ແຕ່ວ່າການຈັດຊື້ອຸປະກອນຮັບໃຊ້ຫ້ອງການ ກໍ່ຍັງມີຢູ່ຈຳນວນນຶ່ງ.

## 5. ແຜນວຽກສຳລັບໄຕມາດຕໍ່ໄປ

ຫ້ອງການ ທລຍ ຂັ້ນສູນກາງ ໄດ້ວາງແຜນສຳລັບໄຕມາດຕໍ່ໄປ (ກໍລະກົດ - ກັນຍາ 2004) ຊຶ່ງສະເຫນີເປັນແຜນຄຸ້ມຄອງ ບໍລິຫານ ຄັດຕິດຢູ່ໃນເອກະສານຊ້ອນທ້າຍ 4. ການກະກຽມແຜນ ໄດ້ກະກຽມໂດຍຈັດລຽງຕາມບູລິມະສິດ ຈາກແຕ່ລະຫນ່ວຍງານ ແລະ ທີມງານ. ສຳລັບແຜນວຽກປະຈຳປີ ທີ່ກວມເອົາວຽກພາກສະຫນາມແມ່ນ ກຳລັງຈັດຕັ້ງປະຕິບັດ.

---

[6] ປະເພດລາຍຈ່າຍ 6 ແມ່ນລາຍຈ່າຍການກະກຽມໂຄງການ Project Preparation Facility (PPF). ລາຍຈ່າຍ PPF ແມ່ນນອນຢູ່ໃນປະເພດລາຍຈ່າຍອື່ນ ໂດຍອີງຕາມປະເພດລາຍຈ່າຍ.

[7] ໃນຈຳນວນ 400,000,000 ກີບ ແມ່ນໄດ້ຮັບຈາກທຶນສົມທົບຂອງລັດຖະບານໂດຍກົງ. ສ່ວນຈຳນວນດຸ່ນດ່ຽງ 788,212,076 ກີບ ແມ່ນມາຈາກແຫລ່ງອື່ນໆ ເຊັ່ນ: i) ມາຈາກບ້ວງເງິນເດືອນພະນັກງານ ຮ່ວງຂອງລັດຖະບານ 12% ທີ່ຫັກລົບກີບຫນີ້ກັບອາກອນເງິນເດືອນຂອງພະນັກງານ, ii) ມາຈາກອາກອນເງິນເດືອນຂອງພະນັກງານທີ່ຫລາຍກ່ວາເງິນເດືອນຮ່ວງສົມທົບຂອງລັດຖະບານ 12% (>12%), ແລະ iii) ລາຍຮັບອື່ນໆ ເຊັ່ນ: ລາຍຮັບຈາກການຂາຍຊ່ອງປະມູນ ແລະ ເສື້ອຢືດ ທລຍ